Institute for Legal Support and Technical Assistance

# ບົດລາຍງານກອງປະຊຸມລະດັບພາກ ປະຈໍາປີ 2020

## ທີ່ແຂວງ ຫຼວງພະບາງ, ຄໍາມ່ວນ ແລະ ຈໍາປາສັກ

*ສ້າງຄວາມເຂັ້ມແຂງໃນການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ ໂດຍເນັ້ນໜັກໃສ່ ບັນຫາການຟອກເງິນ, ການຄ້າມະນຸດ, ຫຼັກຖານໃນການດໍາເນີນຄະດີອາຍາ ແລະ ການຮ່ວມມືສາກົນທາງດ້ານອາຍາ.*










ຮ່ວມຈັດກອງປະຊຸມໂດຍ

ອົງການໄອຍະການປະຊາຊົນສູງສຸດ (OSPP)

ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ (ILSTA)

*ສະໜັບສະໜູນໂດຍ:*

LE GOUVERNEMENT
DU GRAND-DUCHÉ DE LUXEMBOURG
Ministère des Finances

LUXEMBOURG
AID & DEVELOPMENT

ຫ້ອງການສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
ຊັ້ນ 6, ຕຶກ NNN, ຖະໜົນ ບູລິຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (+856) 21 41 0095, ອີເມວ: contact@ilsta.org ເວັບໄຊ: www.ilsta.org

# ກອງປະຊຸມລະດັບພາກ ປະຈຳປີ 2020



ແຂວງ ຫຼວງພະບາງ, ວັນທີ 28 – 30 ກໍລະກົດ 2020



ແຂວງ ຄຳມ່ວນ, ວັນທີ 13 – 15 ຕຸລາ 2020



ແຂວງ ຈຳປາສັກ, ວັນທີ 23 – 25 ພະຈິກ 2020

# ສາລະບານ

ກອງປະຊຸມລະດັບຊາດ, ວັນທີ 11-13 ກຸມພາ 2020 ທີ່ ນະຄອນຫຼວງວຽງຈັນ 2

ແຂວງຫຼວງພະບາງ

ກອງປະຊຸມລະດັບພາກເໜືອ....4
ການກ່າວຄຳໂອວາດ....5
ຫົວຂໍ້ການນຳສະເໜີ....6
ພາກຄຳຖາມ ແລະ ຄຳຕອບ....9
ການແຂ່ງຂັນຖາມ-ຕອບຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ....11

ແຂວງຄຳມ່ວນ

ກອງປະຊຸມລະດັບພາກກາງ....12
ການກ່າວຄຳໂອວາດ....13
ຫົວຂໍ້ການນຳສະເໜີ....14
ກໍລະນີສຶກສາ....17
ພາກຄຳຖາມ ແລະ ຄຳຕອບ....18
ການແຂ່ງຂັນຖາມ-ຕອບຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ....20

ແຂວງຈຳປາສັກ

ກອງປະຊຸມລະດັບພາກໃຕ້....21
ການກ່າວຄຳໂອວາດ....22
ຫົວຂໍ້ການນຳສະເໜີ....23
ກໍລະນີສຶກສາ....27
ພາກຄຳຖາມ ແລະ ຄຳຕອບ....29
ການແຂ່ງຂັນຖາມ-ຕອບຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ....31

## ກອງປະຊຸມລະດັບຊາດກ່ຽວກັບການສ້າງຄວາມເຂັ້ມແຂງໃນການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍເນັ້ນໜັກໃສ່ ບັນຫາການຟອກເງິນ, ການຄ້າມະນຸດ, ຫຼັກຖານໃນການດຳເນີນຄະດີອາຍາ ແລະ ການຮ່ວມມືສາກົນທາງດ້ານອາຍາ.

ກອງປະຊຸມລະດັບຊາດຄັ້ງທີ 4 ປະຈຳປີ 2020 ໄດ້ຖືກຈັດຂຶ້ນຢູ່ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ແລະ ສືບຕໍ່ດ້ວຍກອງປະຊຸມລະດັບພາກ ເຊິ່ງໄດ້ຖືກຈັດຂຶ້ນສຳລັບບັນດາແຂວງພາກເໜືອ, ພາກກາງ ແລະ ພາກໃຕ້.

ກອງປະຊຸມລະດັບຊາດ ເປັນການເປີດເວທີໃຫ້ແກ່ອົງການຕຸລາການ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍຂອງ ສປປ ລາວ ໄດ້ມີໂອກາດແລກປ່ຽນບົດຮຽນ ແລະ ເສີມສ້າງຄວາມຮູ້ຄວາມສາມາດ ເພື່ອສ້າງຄວາມເຂັ້ມແຂງໃນການປະສານງານລະຫວ່າງໜ່ວຍງານໃນຂອບເຂດທົ່ວປະເທດ ພ້ອມທັງຮ່ວມມືກັນຢ່າງກວ້າງຂວາງໃນການຄົ້ນຄວ້າກ່ຽວກັບການດຳເນີນຄະດີອາຍາ ແລະ ປ້ອງກັນອາຊະຍາກຳທີ່ມີການຈັດຕັ້ງ.





## ຈຸດປະສົງຫຼັກຂອງກອງປະຊຸມແມ່ນ:

- ເພື່ອເສີມສ້າງ ຄວາມຮັບຮູ້ກ່ຽວກັບ ຂໍ້ກຳນົດກົດໝາຍທັງພາຍໃນປະເທດ ແລະ ສາກົນກ່ຽວກັບອາຊະຍາກຳທີ່ມີການຈັດຕັ້ງໂດຍເນັ້ນໜັກ ***ການຟອກເງິນ, ການຄ້າມະນຸດ, ຫຼັກຖານໃນການດຳເນີນຄະດີອາຍາ*** ແລະ ***ການຮ່ວມມືສາກົນທາງດ້ານອາຍາ;***
- ***ເພື່ອສົ່ງເສີມ ແລະ ເຜີຍແຜ່ການຈັດຕັ້ງປະຕິບັດທີ່ດີ*** ໃນການຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ;
- ເພື່ອສະໜອງ ແລະ ສະໜັບສະໜູນເວທີສຳລັບ ***ການຮ່ວມມື*** ລະຫວ່າງບັນດາໜ່ວຍງານທີ່ສຳຄັນໃນວຽກງານຕຸລາການ ແລະ ການບັງຄັບໃຊ້ກົດໝາຍເພື່ອການຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ.



# ແຜນທີ່ປະເທດລາວ




| **ຕົວເມືອງ** | **ແຂວງ** |
|---|---|
| ຜົ້ງສາລີ | ຜົ້ງສາລີ |
| ອຸດົມໄຊ | ອຸດົມໄຊ |
| ຫຼວງນ້ຳທາ | ຫຼວງນ້ຳທາ |
| ຫ້ວຍຊາຍ | ບໍ່ແກ້ວ |
| ໄຊຍະບູລີ | ໄຊຍະບູລີ |
| ຫຼວງພະບາງ | ຫຼວງພະບາງ |
| ຊຳເໜືອ | ຫົວພັນ |
| ໂພນສະຫວັນ | ຊຽງຂວາງ |
| ໂພນໂຮງ | ວຽງຈັນ |
| ປາກຊັນ | ບໍລິຄຳໄຊ |
| ທ່າແຂກ | ຄຳມ່ວນ |
| ສະຫວັນນະເຂດ | ສະຫວັນນະເຂດ |
| ສາລະວັນ | ສາລະວັນ |
| ປາກເຊ | ຈຳປາສັກ |
| ອັດຕະປື | ອັດຕະປື |
| ເຊກອງ | ເຊກອງ |



# ກອງປະຊຸມລະດັບພາກ ຄັ້ງທີ I ສຳລັບບັນດາແຂວງພາກເໜືອ ທີ່ ແຂວງຫຼວງພະບາງ

ກອງປະຊຸມລະດັບພາກຄັ້ງທີ I ສຳລັບປີ 2020 ໄດ້ຖືກຈັດຂຶ້ນທີ່ ນະຄອນຫຼວງພະບາງ, ແຂວງຫຼວງພະບາງ ໃນລະຫວ່າງວັນທີ 28 – 30 ກໍລະກົດ 2020. ບັນດາໄອຍະການ, ເຈົ້າໜ້າທີ່ຕຳຫຼວດ ແລະ ຜູ້ພິພາກສາຈາກທັງໝົດ 7 ແຂວງພາກເໜືອໄດ້ເຂົ້າຮ່ວມກອງປະຊຸມ ໃນນັ້ນປະກອບມີ: ແຂວງຫຼວງພະບາງ, ຜົ້ງສາລີ, ຫົວພັນ, ຫຼວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ ແລະ ອຸດົມໄຊ.
ພາຍໃນກອງປະຊຸມດັ່ງກ່າວ, ບັນດາຊ່ຽວຊານໄດ້ນຳສະເໜີກ່ຽວກັບອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ, ເຕັກນິກໃນການສືບສວນ-ສອບສວນ, ການເກັບກຳຫຼັກຖານໃນຄະດີອາຍາ ແລະ ການຮ່ວມມືສາກົນທາງດ້ານອາຍາ.








# ການກ່າວຄຳໂອວາດ

## ພະນະທ່ານ ຄຳສານ ສຸວົງ

ຫົວໜ້າອົງການໄອຍະການປະຊາຊົນສູງສຸດແຫ່ງ ສປປ ລາວ



ການຄ້າມະນຸດ, ການຄ້າຂາຍຢາເສບຕິດ ແລະ ການຟອກເງິນ ເປັນສິ່ງທ້າທາຍທີ່ສຸດໃນສັງຄົມ ເຊິ່ງບໍ່ສະເພາະແຕ່ຢູ່ໃນປະເທດໃດປະເທດໜຶ່ງເທົ່ານັ້ນ ແຕ່ຍັງເກີດຂຶ້ນຢູ່ໃນທົ່ວພາກພື້ນ. ໂດຍສະເພາະຢ່າງຍິ່ງ ໃນຍຸກແຫ່ງໂລກາພິວັດທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການລົງທຶນ, ກຸ່ມອາຊະຍາກອນ ໄດ້ມີການຜັນຂະຫຍາຍກາຍເປັນລັກສະນະແບບເຄືອຂ່າຍ ແລະ ອາຊະຍາກຳທີ່ມີການຈັດຕັ້ງບໍ່ແມ່ນບັນຫາໃໝ່ສຳລັບ ສປປ ລາວ ອີກຕໍ່ໄປ. ອົງການໄອຍະການປະຊາຊົນສູງສຸດ ຍັງສືບຕໍ່ຄົ້ນຄວ້າ ແລະ ປັບປຸງນິຕິກຳຕ່າງໆ ເປັນຕົ້ນແມ່ນບັນດາຄຳແນະນຳກ່ຽວກັບການປະຕິບັດວຽກງານການຕ້ານອາຊະຍາກຳປະເພດຕ່າງໆ ເພື່ອໃຫ້ການປະຕິບັດວຽກງານດັ່ງກ່າວເປັນເອກະພາບກັນໃນຂອບເຂດທົ່ວປະເທດ ໂດຍຖືສຳຄັນການຮ່ວມມືກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ເພື່ອຕ້ານກັບອາຊະຍາກຳຢ່າງມີປະສິດທິຜົນ. ດັ່ງນັ້ນ ບັນດາໜ່ວຍງານບັງຄັບໃຊ້ກົດໝາຍທີ່ສຳຄັນ ຈະຕ້ອງສືບຕໍ່ປະຕິບັດໜ້າທີ່ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການເຫຼົ່ານີ້ຢ່າງເຂັ້ມງວດ.

## ທ່ານ ຣິຊາດ ຟິລິບປາດ

ປະທານສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ



ການແຜ່ລະບາດຂອງພະຍາດ ໂຄວິດ-19 ໄດ້ສ້າງຜົນກະທົບອັນໃຫຍ່ຫຼວງຕໍ່ສັງຄົມ ແລະ ປະຊາຊົນສ່ວນໃຫຍ່ພົບກັບຄວາມຫຍຸ້ງຍາກໃນການດຳລົງຊີວິດເຊິ່ງອາດເຮັດໃຫ້ເຂົາເຈົ້າຫັນໄປຊອກຫາໂອກາດວຽກເຮັດງານທຳແບບຜິດກົດໝາຍ ແລະ ນີ້ອາດກາຍເປັນທ່າແຮງໃຫ້ແກ່ ກຸ່ມອາຊະຍາກອນທີ່ມີການຈັດຕັ້ງໃນການຂະຫຍາຍກິດຈະກຳອາຊະຍາກຳຕ່າງໆ ບໍ່ວ່າຈະເປັນການຄ້າມະນຸດ, ການຄ້າຂາຍຢາເສບຕິດ, ການຟອກເງິນ ແລະ ອື່ນໆ.

ໃນປະຈຸບັນ ກຸ່ມອາຊະຍາກອນໄດ້ມີການປັບຕົວເຂົ້າກັບສະພາບການທີ່ປ່ຽນແປງໄປໂດຍມີລັກສະນະຂ້າມຊາດ ແລະ ທັນສະໄໝຂຶ້ນກວ່າເກົ່າ ເຊິ່ງມີຄວາມສ່ຽງສູງຕໍ່ບັນດາປະເທດທີ່ກຳລັງພັດທະນາ. ດັ່ງນັ້ນ, ການຮ່ວມມືເຊິ່ງກັນ ແລະ ກັນທາງດ້ານກົດໝາຍຈຶ່ງມີຄວາມສຳຄັນໃນການຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດເຫຼົ່ານີ້ ເຊິ່ງເປັນບັນຫາທີ່ສຳຄັນຢູ່ໃນພາກພື້ນອາຊຽນ.

# ຫົວຂໍ້ການນຳສະເໜີ

## ທ່ານ ຈອນ ຄອນນໍລີ

ຜູ້ອຳນວຍການສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ

“ປະເພດຂອງອາຊະຍາກຳ ແລະ ອາຊະຍາກຳທີ່ມີການຈັດຕັ້ງ”




ອາຊະຍາກຳແມ່ນພຶດຕິກຳທີ່ຜິດກົດໝາຍ ເຊິ່ງສາມາດຖືກລົງໂທດໂດຍລັດ ຫຼື ເຈົ້າໜ້າທີ່ທີ່ມີສິດອຳນາດ. ອາຊະຍາກຳຖືກຈັດແບ່ງອອກເປັນປະເພດຕ່າງໆ ເປັນຕົ້ນ ອາຊະຍາກຳທີ່ໃຊ້ຄວາມຮຸນແຮງ, ອາຊະຍາກຳທາງດ້ານຊັບສິນ, ອາຊະຍາກຳທີ່ຕິດພັນກັບສິ່ງເສບຕິດ ແລະ ອາຊະຍາກຳທີ່ມີການຈັດຕັ້ງ. ໜ່ວຍງານບັງຄັບໃຊ້ກົດໝາຍເກັບກຳສະຖິຕິປະຈຳປີຂອງອາຊະຍາກຳຕາມປະເພດຕ່າງໆ. ການວິເຄາະກະແສຂອງອາຊະຍາກຳສາມາດຊ່ວຍໃນການກຳນົດນະໂຍບາຍການປ້ອງກັນອາຊະຍາກຳ. ປະມວນກົດໝາຍອາຍາຂອງ ສປປ ລາວ ສະບັບປີ 2017 ໄດ້ຈັດແບ່ງປະເພດຂອງອາຊະຍາກຳຢູ່ໃນໝວດສະເພາະເຊັ່ນ ການຄ້າຂາຍສິ່ງເສບຕິດ, ການສໍ້ລາດບັງຫຼວງ, ອາຊະຍາກຳທາງດ້ານເສດຖະກິດ ແລະ ອາຊະຍາກຳທາງດ້ານຊັບສິນ.

## ທ່ານ ນາງ ອາລີນາ ທີມູສ໌

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ



ທ່ານ ນາງ ທີມູສ໌ ໄດ້ນຳສະເໜີພາບລວມຂອງອາຊະຍາກຳທາງດ້ານສິ່ງແວດລ້ອມ, ລະບົບຄອມພິວເຕີ, ການຄ້າມະນຸດ ແລະ ອາຊະຍາກຳຄໍເສື້ອຂາວ. ສປປ ລາວ ເປັນເສັ້ນທາງຜ່ານສຳລັບກຸ່ມອາຊະຍາກອນໃນການຂົນສົ່ງ ແລະ ຄ້າຂາຍສັດປ່າທີ່ໃກ້ຈະສູນພັນໄປຍັງປະເທດປາຍທາງເຊັ່ນ: ຫວຽດນາມ ແລະ ສປ ຈີນ. ການຂຸດຄົ້ນປ່າໄມ້ທີ່ຜິດກົດໝາຍ ກໍເປັນອີກບັນຫາໜຶ່ງທີ່ຈຳເປັນຕ້ອງມີກົດໝາຍຄຸ້ມຄອງທີ່ຮັດກຸມ. ການຮ່ວມມືສາກົນລະຫວ່າງເຈົ້າໜ້າທີ່ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງໃນວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳເຫຼົ່ານີ້ຈຶ່ງມີຄວາມສຳຄັນຫຼາຍທີ່ສຸດ.

## ທ່ານ ຖາວອນ ແກ້ວພິລາ

ຫົວໜ້າພະແນກສອບສວນຄະດີ, ກະຊວງປ້ອງກັນຄວາມສະຫງົບ

“ວຽກງານຕ້ານການຄ້າມະນຸດໃນ ສປປ ລາວ”



ສາເຫດຫຼັກຂອງການຕົກເປັນເຫຍື່ອຂອງການຄ້າມະນຸດ ແມ່ນບັນຫາທາງດ້ານຖານະຄອບຄົວ ແລະ ລະດັບການສຶກສາຕ່ຳ ເຊິ່ງເຮັດໃຫ້ບໍ່ມີຄວາມເຂົ້າໃຈໃນບັນຫາການຄ້າມະນຸດ ແລະ ຂາດສີມືແຮງງານ.

ພັກ ແລະ ລັດຖະບານ ໄດ້ວາງນະໂຍບາຍການປົກປ້ອງຈາກການຕົກເປັນເຫຍື່ອຂອງການຄ້າມະນຸດ ເນໃສ່ແມ່ຍິງ ແລະ ເດັກນ້ອຍເປັນຕົ້ນຕໍ ໂດຍການສ້າງໜ່ວຍງານປຶກສາຫາລືດ້ານການຄ້າມະນຸດຂຶ້ນໃນປີ 2005, ແຜນງົບປະມານສະເພາະວຽກງານຕ້ານການຄ້າມະນຸດ, ແຜນງານໃນ 5 ປີຕໍ່ໜ້າ ແລະ ບັນດາຂະແໜງການຮັບຜິດຊອບທີ່ກ່ຽວຂ້ອງເຊັ່ນ: ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ. ທ່ານ ຖາວອນ ໄດ້ກ່າວເນັ້ນເຖິງຄວາມສຳຄັນຂອງການຮ່ວມມືສາກົນໃນການປະຕິບັດວຽກງານຕ້ານການຄ້າມະນຸດຢ່າງມີປະສິດທິພາບ.

## ທ່ານ ວິລະສິດ ສິງກາວົງໄຊ

ຮອງຫົວໜ້າອົງການໄອຍະການປະຊາຊົນພາກກາງ

“ຄຳແນະນຳຮ່ວມກ່ຽວກັບການດຳເນີນຄະດີ, ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ”



*ຄຳແນະນຳຮ່ວມກ່ຽວກັບການດຳເນີນຄະດີອາຍາ, ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ* ວາງອອກໂດຍ ອົງການໄອຍະການປະຊາຊົນ ສານປະຊາຊົນ ແລະ ກະຊວງປ້ອງກັນຄວາມສະຫງົບ ແມ່ນມີຈຸດປະສົງເພື່ອຮັບປະກັນການປະຕິບັດວຽກງານຕົວຈິງທີ່ເປັນເອກະພາບກັນ. ການຄ້າມະນຸດເປັນການກະທຳຜິດທີ່ຈຳເປັນຕ້ອງໄຈ້ແຍກອອກຈາກກໍລະນີຄະດີອາຍາທົ່ວໄປ ດ້ວຍການກຳນົດອົງປະກອບສະເພາະຂອງມັນ. ຕົວຢ່າງການກະກຽມ ແລະ ຄວາມພະຍາຍາມໃນການກະທຳຜິດໃນແຕ່ລະຮູບແບບໄດ້ຖືກຍົກຂຶ້ນມາປະກອບຄຳອະທິບາຍເພື່ອເສີມສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄຳແນະນຳສະບັບນີ້.

## ທ່ານ ນາງ ເພີຣິນ ຊີມອນ

ເຈົ້າໜ້າທີ່ປະສານງານ, ມະຫາວິທະຍາໄລລຸກຊຳບວກ ແລະ ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ



“ຄວາມສຳຄັນຂອງຫຼັກຖານໃນການດຳເນີນຄະດີອາຍາ”

ຫຼັກຖານມີຄວາມສຳຄັນໃນການດຳເນີນທຸກໆຄະດີອາຍາ ແລະ ຈະຕ້ອງຖືກເກັບຮັກສາ ແລະ ນຳໃຊ້ຢ່າງຖືກຕ້ອງໃນແຕ່ລະຂັ້ນຕອນຂອງການດຳເນີນຄະດີ ນັບຕັ້ງແຕ່ການສືບສວນ-ສອບສວນ ໄປຈົນເຖິງການພິຈາລະນາຕັດສິນຄະດີໃນສານ. ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການ ແລະ ຜູ້ພິພາກສາ ມີບົດບາດທີ່ສຳຄັນໃນການກວດກາ, ຊັ່ງຊາຕີລາຄາຫຼັກຖານ. ມາດຕາ 36 ຂອງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງ ສປປ ລາວ ໄດ້ກຳນົດລະບຽບການສຳລັບການເກັບກຳ ແລະ ພິສູດຫຼັກຖານທີ່ຖືກຕ້ອງ. ການສັນນິຖານຜູ້ຖືກຫາວ່າເປັນຜູ້ບໍລິສຸດ ເປັນຫຼັກການພື້ນຖານໃນການດຳເນີນຄະດີອາຍາ.

## ທ່ານ ສຸພາສິດ ລໍວັນໄຊ

ຮອງຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ

“ຫຼັກຖານໃນຄະດີອາຍາ”



ການນຳສະເໜີກ່ຽວກັບຫຼັກຖານໃນຄະດີອາຍານີ້ ແມ່ນເນັ້ນໃສ່ການປະກອບຫຼັກຖານທີ່ຖືກຕ້ອງ ເຊິ່ງຈະຕ້ອງສາມາດຢັ້ງຢືນ ແລະ ພິສູດຄວາມຈິງຂອງເຫດການໄດ້. ຫຼັກຖານມີຄວາມສຳຄັນໃນການພິສູດການກະທຳຜິດທາງອາຍາໂດຍສະເພາະ ຫຼັກຖານຜູກມັດ ແລະ ຫຼັກຖານແກ້ມັດ ເຊິ່ງເປັນພື້ນຖານໃຫ້ແກ່ການພິຈາລະນາຕັດສິນຄະດີ, ການເພີ່ມໂທດ ຫຼື ການຫຼຸດຜ່ອນໂທດ. ການນຳສະເໜີນີ້ຍັງກວມເອົາອົງປະກອບຂອງອາຊະຍາກຳ, ປະເພດຫຼັກຖານ ພ້ອມທັງວິທີການກວດກາ, ຊັ່ງຊາຕີລາຄາຫຼັກຖານ ໂດຍອົງການທີ່ມີສິດກວດກາໄດ້ແກ່ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ເປັນຕົ້ນ.

## ທ່ານ ຄິດ ຟາຕູຣາຊັນ

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ

"ການຟອກເງິນ ແລະ ການກະທຳຜິດຕົ້ນ"



ມາດຕາ 130 ຂອງປະມວນກົດໝາຍອາຍາ ປີ 2017 ແລະ ມາດຕາ 8 ຂອງກົດໝາຍວ່າດ້ວຍການຕ້ານ, ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປີ 2014 ໄດ້ກຳນົດການກະທຳຜິດສະຖານການຟອກເງິນ. ກຸ່ມອາຊະຍາກອນນຳໃຊ້ແຜນການຟອກເງິນເພື່ອປົດບັງຈຸດເຊື່ອມໂຍງລະຫວ່າງລາຍໄດ້ທີ່ຜິດກົດໝາຍ ແລະ ການກະທຳຜິດຕົ້ນ. ຂອບວຽກດ້ານກົດໝາຍພາຍໃນປະເທດ ມີຄວາມສຳຄັນໃນການຕ້ານ, ສະກັດກັ້ນອາຊະຍາກຳທີ່ມີການຈັດຕັ້ງ ເຊິ່ງການດຳເນີນຄະດີ, ການຍຶດ ແລະ ອາຍັດຊັບສິນທີ່ໄດ້ຈາກການກະທຳຜິດສາມາດຊ່ວຍຍຸຕິການດຳເນີນກິດຈະກຳທີ່ຜິດກົດໝາຍຂອງກຸ່ມອາຊະຍາກອນໄດ້ຢ່າງມີປະສິດທິພາບ.

## ທ່ານ ລັງສີ ສີບຸນເຮືອງ

ອະດີດຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດແຫ່ງ ສປປ ລາວ

"ຈັນຍາບັນຂອງພະນັກງານປົກປ້ອງກົດໝາຍ"



ຜູ້ປົກປ້ອງກົດໝາຍກໍຄືຜູ້ພິພາກສາ, ໄອຍະການ ແລະ ທະນາຍຄວາມ ແມ່ນຈະຕ້ອງຮູ້ ແລະ ປະຕິບັດໜ້າທີ່ດ້ວຍຫຼັກຈັນຍາບັນ-ຈັນຍາທຳ. ທ່ານ ລັງສີ ໄດ້ຍົກເອົານິຍາມຂອງຄຸນສົມບັດສິນທຳປະຕິວັດພ້ອມຕົວຢ່າງທີ່ດີ ແລະ ບໍ່ດີ ເຊິ່ງຜູ້ປົກປ້ອງກົດໝາຍຕ້ອງໄດ້ເອົາໃຈໃສ່. ທ່ານໄດ້ຍົກໃຫ້ເຫັນເຖິງ 4 ອັກຄະຕິທີ່ຜູ້ປົກປ້ອງກົດໝາຍຕ້ອງຫຼີກລ່ຽງເພື່ອຮັບປະກັນຄວາມຍຸຕິທຳໃນການດຳເນີນຄະດີ.

ນອກຈາກນີ້, ກໍຍັງມີການສົມທຽບການປະຕິບັດຫຼັກຈັນຍາບັນໃນອະດີດ ແລະ ປະຈຸບັນ ເພື່ອສະແດງເຖິງຄວາມສຳຄັນຂອງຫຼັກຈັນຍາບັນ-ຈັນຍາທຳໃນການປົກປ້ອງວິຊາອາຊີບຂອງຜູ້ປົກປ້ອງກົດໝາຍ.

## ທ່ານ ຄິດ ຟາຕູຣາຊັນ

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ

"ການສືບສວນ-ສອບສວນທາງດ້ານການເງິນ"




ທ່ານ ຟາຕູຣາຊັນ ໄດ້ຍົກເອົາການດຳເນີນຄະດີຕົວຈິງໃນກໍລະນີຄ້າຂາຍຢາເສບຕິດ ເພື່ອມາອະທິບາຍຂັ້ນຕອນ ແລະ ວິທີການສືບສວນ-ສອບສວນທາງດ້ານການເງິນ ເປັນຕົ້ນແມ່ນ ການລາຍງານທຸລະກຳທີ່ໜ້າສົງໄສ ແລະ ແຫຼ່ງຂໍ້ມູນຈາກໜ່ວຍງານທີ່ມີໜ້າທີ່ລາຍງານ. ການສືບສວນ-ສອບສວນທາງດ້ານການເງິນແມ່ນການຕິດຕາມການເຄື່ອນໄຫວຂອງເງິນສົດ, ຊັບສິນ ເຊິ່ງແຫຼ່ງຂໍ້ມູນ ແລະ ຮ່ອງຮອຍຂອງທຸລະກຳການເງິນ ແລະ ຊັບສິນຕ່າງໆທີ່ຕິດພັນກັບການຟອກເງິນມີຄວາມສຳຄັນໃນການດຳເນີນການສືບສວນ-ສອບສວນກ່ຽວກັບການຟອກເງິນ ຄຽງຄູ່ໄປກັບການກະທຳຜິດຕົ້ນ.

# ພາກຄຳຖາມ ແລະ ຄຳຕອບ

## ທ່ານ ກຸ່ຍສີ ສີລາພອນ,

ອົງການໄອຍະການປະຊາຊົນ ແຂວງຫົວພັນ



**ຄຳຖາມ:** ໃນຄະດີການແຕ່ງດອງຄົນລາວ-ຈີນ ທີ່ເກີດມີການຂູດຮີດທາງເພດ, ພວກເຮົາຈະຮູ້ໄດ້ແນວໃດວ່າຄະດີນີ້ຕົກຢູ່ໃນກໍລະນີການຄ້າມະນຸດ? ເຈົ້າໜ້າທີ່ຄວນຈະດຳເນີນຄະດີຜູ້ໃດ?

**ຄຳຕອບ:** ທ່ານ ວິລະສິດ ສິງກາວົງໄຊ, ຮອງຫົວໜ້າອົງການໄອຍະການປະຊາຊົນພາກກາງ, ກ່າວວ່າ ໃນການກຳນົດຄະດີການຄ້າມະນຸດນັ້ນຕ້ອງມີ 3 ອົງປະກອບຂອງການກະທຳຜິດ: ການກະທຳ, ວິທີການ ແລະ ຈຸດປະສົງ ພ້ອມດ້ວຍ 4 ອົງປະກອບທາງອາຍາ. ພ້ອມນີ້ຍັງຕ້ອງໄດ້ກຳນົດຕົວຂອງຜູ້ຖືກເຄາະຮ້າຍກ່ອນວ່າເປັນເຫຍື່ອຂອງການຄ້າມະນຸດແທ້ບໍ ແລະ ຕ້ອງມີການສືບສວນ-ສອບສວນບຸກຄົນທີ່ກ່ຽວຂ້ອງ, ລວມທັງຜູ້ຖືກເຄາະຮ້າຍເພື່ອຊອກຫາຄວາມຈິງຂອງຄະດີ. ໃນກໍລະນີການແຕ່ງດອງ, ເຈົ້າໜ້າທີ່ຕ້ອງພິຈາລະນາເບິ່ງວ່າການແຕ່ງດອງນັ້ນເປັນຕາມປະເພນີ ໂດຍບໍ່ຖືກຕ້ອງຕາມກົດໝາຍບໍ ແລະ ມີການຕົວະຍົວະຫຼອກລວງ ຫຼື ການຂູດຮີດບໍ ເຊິ່ງສິ່ງນີ້ສາມາດຊ່ວຍກຳນົດເປົ້າໝາຍຂອງການແຕ່ງດອງແອບແຝງ. ຖ້າຫາກຄະດີດັ່ງກ່າວມີຄົບອົງປະກອບທັງໝົດທີ່ກ່າວມາຈຶ່ງສາມາດກຳນົດເປັນຄະດີການຄ້າມະນຸດ ແລະ ດຳເນີນການສັ່ງຟ້ອງຄະດີໄດ້.

## ທ່ານ ສຸພາສິດ ລໍວັນໄຊ,

ຮອງຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ

**ຄຳຖາມ:** ສຳລັບການຍຶດ ຫຼື ອາຍັດຊັບສິນທີ່ກ່ຽວຂ້ອງກັບການຟອກເງິນໃນກໍລະນີທີ່ຜູ້ຖືກຫາໄດ້ຫຼົບໜີໄປໃນລະຫວ່າງການດຳເນີນຄະດີ ແມ່ນຕ້ອງໄດ້ອີງໃສ່ກົດໝາຍໃດ?



**ຄຳຕອບ:** ທ່ານ ຟາຕູຮາຊັນ, ເຈົ້າໜ້າທີ່ໂຄງການສະຖາບັນ ILSTA, ກ່າວວ່າ ກົດໝາຍໄດ້ກຳນົດໄວ້ວ່າ ຊັບສິນສາມາດຮິບໄດ້ ໃນກໍລະນີທີ່ມີຫຼັກຖານຄົບຖ້ວນສົມບູນ ເຊິ່ງສາມາດນຳໃຊ້ມາດຕາ 130 ຂອງປະມວນກົດໝາຍອາຍາໄດ້. ສານມີສິດອອກຄຳສັ່ງອາຍັດຊັບສິນເພາະວ່າກົດໝາຍບໍ່ໄດ້ກຳນົດໄວ້ວ່າຈຳເປັນຕ້ອງມີຜູ້ຖືກຫາເຂົ້າຮ່ວມທີ່ປະຊຸມສານ.

## ທ່ານ ບຸນອ້ອມ ພັນທະວົງ,

ຜູ້ພິພາກສາ ສານປະຊາຊົນ ແຂວງໄຊຍະບູລີ



**ຄຳຖາມ:** ພວກເຮົາສາມາດດຳເນີນຄະດີການຟອກເງິນທີ່ມາຈາກ ການກະທຳຜິດຕົ້ນທີ່ຊຸກເຊື່ອງໃນທຸລະກິດນ້ອຍໆໄດ້ແນວໃດ?

**ຄຳຕອບ:** ທ່ານ ຟາຕູຣາຊັນ ກ່າວວ່າ ອີງຕາມຄຳສັ່ງແນະນຳວ່າດ້ວຍການດຳເນີນຄະດີການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ມາດຕາ 9 ໄດ້ກຳນົດໄວ້ວ່າ ຖ້າຫາກມີການກະທຳຜິດຕົ້ນ ຈະຕ້ອງດຳເນີນການສືບສວນ-ສອບສວນແບບຄູ່ຂະໜານ ເຊິ່ງກໍຄືການສືບສວນ-ສອບສວນການກະທຳຜິດຕົ້ນຄຽງຄູ່ໄປພ້ອມກັບການສືບສວນ-ສອບສວນທາງດ້ານການເງິນສຳລັບການຟອກເງິນ ເພື່ອປະກອບຫຼັກຖານທາງດ້ານການເງິນ ແລ້ວສະເໜີຕໍ່ສານເພື່ອພິຈາລະນາອອກຄຳສັ່ງຮິບຊັບສິນດັ່ງກ່າວ.

## ທ່ານ ນາງ ຈັນສະໝອນ ສູນນະລາດ,

ອົງການໄອຍະການປະຊາຊົນ ແຂວງຫຼວງພະບາງ




**ຄຳຖາມ:** ອີງຕາມກົດໝາຍການໄດ້ມາເຊິ່ງຫຼັກຖານຈາກການທຸບຕີທໍລະມານ ແລະ ການໃຊ້ຄວາມຮຸນແຮງໃນຮູບແບບຕ່າງໆແມ່ນຖືວ່າບໍ່ສາມາດໃຊ້ໄດ້. ສານຄວນຕັດສິນເພີ່ມໂທດ ຫຼື ຫຼຸດຜ່ອນໂທດແນວໃດ ຖ້າຫາກຈຳເລີຍປະຕິເສດຄຳຮັບສາລະພາບ ຫຼື ອ້າງວ່າຕົນຮັບຄຳສາລະພາບຍ້ອນວ່າຖືກທຸບຕີທໍລະມານ ຫຼື ຖ້າຫາກຈຳເລີຍຍອມຮັບຄຳສາລະພາບວ່າຕົນໄດ້ກະທຳຜິດ ໃນຕອນສຸດທ້າຍ?

**ຄຳຕອບ:** ທ່ານ ສຸພາສິດ ລໍວັນໄຊ, ຮອງຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ ກ່າວວ່າ: ຖ້າຫາກວ່າ ຜູ້ຖືກຫາຮັບສາລະພາບໃນຂັ້ນສານແມ່ນຜູ້ກ່ຽວຈະຖືວ່າເປັນຈຳເລີຍ. ດັ່ງນັ້ນ, ອີງຕາມມາດຕາ 36 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ຄຳຮັບສາລະພາບຂອງຈຳເລີຍແມ່ນບໍ່ພຽງພໍຕໍ່ການພິຈາລະນາຄະດີ. ດັ່ງນັ້ນ, ຕ້ອງມີຫຼັກຖານອື່ນມາປະກອບຕື່ມຈຶ່ງສາມາດຕັດສິນລົງໂທດຜູ້ກະທຳຜິດໄດ້. ຄຳໃຫ້ການທີ່ໄດ້ມາຈາກ ການທຸບຕີທໍລະມານ ຫຼື ການບັງຄັບແມ່ນບໍ່ສາມາດນຳໃຊ້ໃນການດຳເນີນຄະດີໄດ້.

# ການແຂ່ງຂັນຖາມ-ຕອບຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ




ຜູ້ຊະນະເລີດສຳລັບກິດຈະກຳການຕອບຄຳຖາມຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ
ໃນກອງປະຊຸມລະດັບພາກຄັ້ງທຳອິດ ທີ່ ແຂວງຫຼວງພະບາງ
ທ່ານ ບຸນໄຊ ບຸນແກ່ນ, ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ
ຫ້ອງການຕຳຫຼວດປ້ອງກັນຄວາມສະຫງົບ ແຂວງໄຊຍະບູລີ

www.ilsta.org



# ກອງປະຊຸມລະດັບພາກ ຄັ້ງທີ II ສຳລັບບັນດາແຂວງພາກກາງ ທີ່ ແຂວງຄຳມ່ວນ

ກອງປະຊຸມລະດັບພາກຄັ້ງທີ II ໄດ້ຈັດຂຶ້ນທີ່ ເມືອງ ທ່າແຂກ, ແຂວງຄຳມ່ວນ ໃນລະຫວ່າງວັນທີ 13 – 15 ຕຸລາ 2020. ພະນັກງານຈາກອົງການໄອຍະການປະຊາຊົນ, ໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ອົງການຕຸລາການຂອງບັນດາແຂວງພາກກາງ ເຊັ່ນ: ແຂວງໄຊສົມບູນ, ແຂວງຊຽງຂວາງ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ນະຄອນຫຼວງວຽງຈັນ ກໍໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.








# ການກ່າວຄຳໂອວາດ

## ທ່ານ ບຸນຍັງ ຈັນດາລາສານ

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ



ອາຊະຍາກຳທີ່ມີການຈັດຕັ້ງ ໂດຍສະເພາະບັນຫາການຟອກເງິນເປັນສິ່ງທ້າທາຍຕໍ່ການພັດທະນາເສດຖະກິດທັງພາຍໃນປະເທດ ແລະ ສາກົນ. ກຸ່ມອາຊະຍາກອນໄດ້ພະຍາຍາມສວຍໃຊ້ທຸກວິທີທາງໃນການແຊກແຊງເຂົ້າໃນລະບົບເສດຖະກິດເພື່ອຊອກຫາຜົນປະໂຫຍດໃຫ້ແກ່ຕົນເອງ. ບັນຫາການຄ້າມະນຸດ ແລະ ການຟອກເງິນບໍ່ແມ່ນບັນຫາໃໝ່ຢູ່ພາຍໃນ ສປປ ລາວ. ເຊິ່ງນັ້ນກໍໝາຍຄວາມວ່າ ການປັບປຸງກົດໝາຍ ແລະ ລະບຽບການປົກຄອງ ແມ່ນຕ້ອງແນໃສ່ການແກ້ໄຂບັນຫາດັ່ງກ່າວ. ບັນດາໜ່ວຍງານບັງຄັບໃຊ້ກົດໝາຍ ກໍຄື ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ກະຊວງປ້ອງກັນຄວາມສະຫງົບ ໄດ້ອອກຄຳສັ່ງແນະນຳຮ່ວມກ່ຽວກັບອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍສະເພາະ ເລື່ອງການຄ້າມະນຸດ ໂດຍແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງພົນລະເມືອງ ແລະ ຮັບປະກັນຄວາມຍຸຕິທຳໃນສັງຄົມ.

## ທ່ານຣິຊາດ ຟີລິບປາດ

ປະທານສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ



ໃນການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງແມ່ນຈຳເປັນທີ່ຈະຕ້ອງມີການຮ່ວມມືກັບສາກົນຢ່າງທ້າວທັນ ແລະ ຕໍ່ເນື່ອງ ພ້ອມທັງຕ້ອງມີການແລກປ່ຽນຂໍ້ມູນຂ່າວສານລະຫວ່າງບັນດາໜ່ວຍງານ ແລະ ເຕັກນິກການສືບສວນ-ສອບສວນ ທີ່ທັນສະໄໝ. ເຈົ້າໜ້າທີ່ລັດ ຈະຕ້ອງມີການປັບຕົວຢ່າງວ່ອງໄວເພື່ອໃຫ້ທັນຕາມສະພາບການປ່ຽນແປງໃໝ່ ແລະ ສ້າງຊ່ອງທາງໃນການແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍມີຄວາມສຳຄັນຕໍ່ການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ການພິຈາລະນາຕັດສິນຄະດີ. ສະນັ້ນ, ພວກເຮົາຢາກສົ່ງເສີມການຮັບຮອງກົດໝາຍວ່າດ້ວຍການຮ່ວມມືຍຸຕິທຳລະຫວ່າງປະເທດ ຂອງ ສປປ ລາວ ໃນໄວໆນີ້. ໃນຖານະທີ່ເປັນຄູ່ຮ່ວມມືກັບລັດຖະບານລາວ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ ຈະສືບຕໍ່ສະໜັບສະໜູນຄວາມພະຍາຍາມອັນມີຄວາມໝາຍຄວາມສຳຄັນດັ່ງກ່າວ.



# ຫົວຂໍ້ການນຳສະເໜີ

## ທ່ານ ຈອນ ຄອນນໍລີ ແລະ ທ່ານ ນາງ ອາລີນາ ທີມູສ໌

ຜູ້ອຳນວຍການ ແລະ ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
"ປະເພດຂອງອາຊະຍາກຳ ແລະ ອາຊະຍາກຳທີ່ມີການຈັດຕັ້ງ"



ປະເພດອາຊະຍາກຳທີ່ຕິດພັນກັບ ການໃຊ້ຄວາມຮຸນແຮງ, ຊັບສິນ, ສິ່ງເສບຕິດ, ສິ່ງແວດລ້ອມ, ລວມເຖິງ ອາຊະຍາກຳຄໍເສື້ອຂາວ ແລະ ອາຊະຍາກຳແບບມີການຈັດຕັ້ງ ໄດ້ຖືກນຳສະເໜີ ໂດຍອ້າງອີງເຖິງປະມວນກົດໝາຍອາຍາຂອງ ສປປ ລາວ ສະບັບປັບປຸງປີ 2017 ພ້ອມດ້ວຍສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (UNTOC). ອາຊະຍາກຳແຕ່ລະປະເພດໄດ້ຖືກຍົກຂຶ້ນມາອະທິບາຍ ຄວາມໝາຍພ້ອມດ້ວຍຕົວຢ່າງ. ການເກັບກຳສະຖິຕິອາຊະຍາກຳຕາມປະເພດສາມາດຊ່ວຍລັດຖະບານແນໃສ່ບັນຫາທີ່ສຳຄັນເພື່ອກຳນົດນະໂຍບາຍປ້ອງກັນອາຊະຍາກຳ.



## ທ່ານ ວິລະສິດ ສິງກາວົງໄຊ

ຮອງຫົວໜ້າອົງການໄອຍະການປະຊາຊົນພາກກາງ



"ຄຳແນະນຳຮ່ວມກ່ຽວກັບການດຳເນີນຄະດີ, ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ"

ທ່ານ ວິລະສິດ ເນັ້ນເຖິງຄວາມສຳຄັນຂອງການເສີມສ້າງຄວາມເຂົ້າໃຈຢ່າງເປັນເອກະພາບໃນການຈັດຕັ້ງປະຕິບັດ *ຄຳແນະນຳຮ່ວມ ກ່ຽວກັບການດຳເນີນຄະດີອາຍາ, ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ* ເຊິ່ງເປັນບ່ອນອ້າງອີງໃຫ້ແກ່ອົງການດຳເນີນຄະດີອາຍາໃນ ພາກປະຕິບັດຕົວຈິງ. ພ້ອມທັງອະທິບາຍການນຳໃຊ້ມາດຕາທີ່ສຳຄັນໃນຄຳແນະນຳຮ່ວມເຊັ່ນ: ມາດຕາ 3 ການແຕ່ງດອງແອບແຝງ ທີ່ໄດ້ກຳນົດວິທີການໃນຮູບແບບການໝັ້ນໝາຍ ຫຼື ແຕ່ງດອງແອບແຝງເຊັ່ນ: ການວາງແຜນ, ການເຮັດເອກະສານ, ແບບຟອມຕ່າງໆທີ່ກ່ຽວຂ້ອງ.

## ທ່ານ ຄຣິສ ແບັດ

ທີ່ປຶກສາດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນລະດັບພາກພື້ນ,
ອົງການສະຫະປະຊາຊາດຕ້ານສິ່ງເສບຕິດ ແລະ ອາຊະຍາກຳ (UNODC)

"ກົນໄກຮ່ວມມືສາກົນທີ່ບໍ່ເປັນທາງການໃນເລື່ອງຄະດີອາຍາ"




ການຮ່ວມມືສາກົນເປັນສິ່ງທີ່ສຳຄັນທີ່ສຸດໃນການຕ້ານອາຊະຍາກຳຂ້າມຊາດ. ນອກຈາກກົນໄກແບບທາງການໃນການຮ່ວມມືສາກົນທາງອາຍາເຊັ່ນ: ການຮ່ວມມືຍຸຕິທຳລະຫວ່າງປະເທດ, ກໍຍັງມີຫຼາຍວິທີການທີ່ບໍ່ເປັນທາງການ ເຊິ່ງເຈົ້າໜ້າທີ່ຄວນນຳໃຊ້. ໃນນັ້ນມີ ການແລກປ່ຽນຂໍ້ມູນລະຫວ່າງ ໜ່ວຍງານຂໍ້ມູນຕ້ານການຟອກເງິນ (FIU to FIU), ອົງການເກັບກູ້ຊັບສິນພາກພື້ນອາຊີ-ປາຊີຟິກ (ARIN-AP). ນອກນີ້ກໍຍັງມີການຮ່ວມມືລະຫວ່າງເຈົ້າໜ້າທີ່ຕຳຫຼວດເຊັ່ນ: ອົງການຕຳຫຼວດສາກົນ (INTERPOL), ອົງການຕຳຫຼວດເອີຣົບ (EUROPOL), ສະມາຄົມເຈົ້າໜ້າທີ່ປະຕິບັດກົດໝາຍ (FLEC), ອົງການ UNODC ແລະ ສະຖານທູດຕ່າງປະເທດທີ່ປະຈຳຢູ່ ສປປ ລາວ.

## ທ່ານ ນາງ ເມັດມະນີ ວັນນະສີ

ຮອງຫົວໜ້າພະແນກຮ່ວມມືກັບຕ່າງປະເທດ, ກົມແຜນການ ແລະ ຮ່ວມມືກັບຕ່າງປະເທດ ອົງການໄອຍະການປະຊາຊົນສູງສຸດ

"ການຮ່ວມມືທາງດ້ານຍຸຕິທຳລະຫວ່າງປະເທດໃນ ສປປ ລາວ"



ສປປ ລາວ ກຳລັງກະກຽມຮັບຮອງເອົາ ຮ່າງກົດໝາຍວ່າດ້ວຍການຮ່ວມມືຍຸຕິທຳລະຫວ່າງປະເທດ ທີ່ກຳນົດໃຫ້ ອົງການໄອຍະການປະຊາຊົນສູງສຸດ ເປັນອົງການໃຈກາງໃນການຊີ້ນຳ-ນຳພາ ການຄົ້ນຄວ້າຄຳຮ້ອງຂໍທີ່ສົ່ງມາຈາກຕ່າງປະເທດ ຫຼື ສົ່ງອອກໄປຍັງຕ່າງປະເທດ. ພ້ອມນີ້, ກໍໄດ້ອະທິບາຍຂະບວນການສົ່ງຄຳຮ້ອງຂໍບົນພື້ນຖານສົນທິສັນຍາສາກົນ ເຊິ່ງໄດ້ແກ່ ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (UNTOC) ແລະ ສົນທິສັນຍາສອງຝ່າຍ. ໃນກໍລະນີທີ່ບໍ່ມີສົນທິສັນຍາທີ່ເປັນພາຄີຮ່ວມກັນ, ການຮ້ອງຂໍແມ່ນສາມາດດຳເນີນໂດຍຜ່ານທາງການທູດ ແລະ ກົນໄກຂອງອົງການຕຳຫຼວດສາກົນ ຫຼື ຕຳຫຼວດອາຊຽນ ບົນພື້ນຖານຫຼັກການທີ່ມີຢູ່.

## ທ່ານ ພັທ ຖາວອນ ແກ້ວພິລາ

ຫົວໜ້າພະແນກສອບສວນ, ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ

"ການເຄື່ອນໄຫວວຽກງານຕ້ານການຄ້າມະນຸດຢູ່ ສປປ ລາວ"



ໃນຂອບວຽກກົດໝາຍ ສປປ ລາວໄດ້ສ້າງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ມາດຕາ 215 ຂອງປະມວນກົດໝາຍອາຍາ ສະບັບປີ 2017 ໄດ້ກຳນົດການຄ້າມະນຸດເປັນການກະທຳຜິດທາງອາຍາ.

ສປປ ລາວ ເຫັນໄດ້ເຖິງຄວາມສຳຄັນຂອງການຮ່ວມມືສາກົນໃນວຽກງານຕ້ານການຄ້າມະນຸດ ເຊິ່ງສະແດງອອກໃນການເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສະຫະປະຊາຊາດທີ່ກ່ຽວຂ້ອງ ແລະ *ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.* ພ້ອມນີ້, ທ່ານກໍໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍໃນການດຳເນີນວຽກງານຕ້ານການຄ້າມະນຸດ ໂດຍສະເພາະການພົວພັນຮ່ວມມືເພື່ອຂໍຂໍ້ມູນກັບປະເທດທີ່ຍັງບໍ່ທັນມີບົດບັນທຶກຄວາມເຂົ້າໃຈ (MOU) ກັບ ສປປ ລາວ.

## ທ່ານ ຄິດ ຟາຄູຮາຊັນ

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ

"ການຟອກເງິນ ແລະ ການກະທຳຜິດຕົ້ນ"



ຂະບວນການຟອກເງິນປະກອບມີ 3 ຂັ້ນຕອນໄດ້ແກ່: 1) ການນຳເອົາເງິນເຂົ້າສູ່ລະບົບ; 2) ການເຮັດທຸລະກຳທີ່ສັບຊ້ອນ; 3) ການນຳເອົາເງິນອອກມາ. ຈຸດປະສົງຂອງການຟອກເງິນແມ່ນເພື່ອປົກປິດແຫຼ່ງທີ່ມາຂອງລາຍໄດ້ຈາກການກໍ່ອາຊະຍາກຳເອີ້ນວ່າ ການກະທຳຜິດຕົ້ນ.

ເພື່ອສ້າງຄວາມເຂົ້າໃຈຍິ່ງຂຶ້ນ, ນິຍາມຂອງການຟອກເງິນ ແລະ ການກະທຳຜິດຕົ້ນທີ່ກຳນົດໄວ້ຢູ່ໃນກົດໝາຍທີ່ກ່ຽວຂ້ອງໄດ້ຖືກນຳມາອະທິບາຍພ້ອມດ້ວຍກໍລະນີສຶກສາການດຳເນີນຄະດີການຟອກເງິນ ເຊິ່ງຜູ້ກະທຳຜິດນຳໃຊ້ວິທີການຊຸກເຊື່ອງ, ປ່ຽນຮູບ, ຂົນສົ່ງ ຫຼື ໂອນກຳມະສິດຊັບສິນທີ່ຜິດກົດໝາຍ. ນອກຈາກນີ້ ຍັງມີການຊື້ສິ່ງຂອງທີ່ມີຄ່າເຊັ່ນ ຄຳ, ລົດ, ໂມງທີ່ຫຼູຫຼາ ແລະ ການເຮັດທຸລະກິດທີ່ຖືກກົດໝາຍເຊັ່ນ ການສ້າງຕັ້ງບໍລິສັດນ້ຳມັນ.

## ທ່ານ ສຸພາສິດ ລໍວັນໄຊ

ຮອງຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ
"ຫຼັກຖານໃນຄະດີອາຍາ ຕາມກົດໝາຍລາວ"



ທ່ານ ສຸພາສິດ ໄດ້ກ່າວເຖິງຫຼັກຖານປະເພດຕ່າງໆອັນເປັນບ່ອນອີງໃຫ້ແກ່ການດຳເນີນຄະດີອາຍາ ໃນການພິສູດຄວາມຈິງ, ກຳນົດອົງປະກອບຂອງການກະທຳຜິດ ແລະ ສາເຫດຂອງການເພີ່ມ ຫຼື ຫຼຸດຜ່ອນໂທດ. ຫຼັກຖານແຕ່ລະປະເພດໄດ້ຖືກນຳມາອະທິບາຍຢ່າງລະອຽດ ໂດຍອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ນອກນີ້, ທ່ານ ສຸພາສິດ ຍັງໄດ້ຍົກບັນຫາກ່ຽວກັບການເກັບກຳ ຫຼັກຖານທາງດ້ານການເງິນ ໂດຍຊີ້ໃຫ້ເຫັນເຖິງແຫຼ່ງຂໍ້ມູນທີ່ສຳຄັນເຊັ່ນ: 1) ຂໍ້ມູນເປີດ: ທະບຽນທີ່ດິນ, ລົດ, ທຸລະກິດ, ບັນຊີທະນາຄານ ແລະ ອື່ນໆທີ່ບໍ່ເປັນຄວາມລັບ; ແລະ 2) ຂໍ້ມູນລັບ: ການສຳພາດ, ການເກັບໂຮມຫຼັກຖານທາງນິຕິວິທະຍາ ແລະ ອື່ນໆ. ໃນຕອນທ້າຍ, ທ່ານໄດ້ຍົກພາລະບົດບາດຂອງອົງການທີ່ມີສິດ ແລະ ໜ້າທີ່ໃນການກວດກາ ແລະ ຊັ່ງຊາຕີລາຄາຫຼັກຖານ ເປັນຕົ້ນແມ່ນ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ.

## ທ່ານ ຄີດ ຟາຕູຣາຊັນ

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
"ການສືບສວນ-ສອບສວນທາງດ້ານການເງິນ"

ເຕັກນິກການສືບສວນ-ສອບສວນທາງດ້ານການເງິນ ທີ່ນຳໃຊ້ໃນຄະດີຕົວຈິງ ສະແດງໃຫ້ເຫັນເຖິງວິທີການ ແລະ ແຫຼ່ງຂໍ້ມູນທີ່ສຳຄັນໃນຄະດີການຟອກເງິນ. ການສ້າງປະຫວັດຂໍ້ມູນທາງການເງິນຂອງຜູ້ຖືກສົງໄສ ໂດຍການຕິດຕາມຊັບສິນ, ທຸລະກິດ ແລະ ການເຮັດທຸລະກຳທີ່ໜ້າສົງໄສ ສາມາດພິສູດວ່າ ຜູ້ຖືກສົງໄສກຳລັງປົກປິດແຫຼ່ງທີ່ມາຂອງຊັບສິນທີ່ມີສູງເກີນລາຍຮັບທີ່ຖືກກົດໝາຍຂອງຕົນ ຫຼື ບໍ່. ການປະຕິບັດດັ່ງກ່າວນີ້ ສາມາດດຳເນີນຄຽງຄູ່ໄປກັບການສືບສວນ-ສອບສວນການກະທຳຜິດຕົ້ນ.




## ທ່ານ ຄຣິສ ແບັດ

ທີ່ປຶກສາດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນລະດັບພາກພື້ນ,
ອົງການສະຫະປະຊາຊາດຕ້ານສິ່ງເສບຕິດ ແລະ ອາຊະຍາກຳ (UNODC)
"ມາດຕາ 130 ຂອງປະມວນກົດໝາຍອາຍາ (ການຟອກເງິນ): ອົງປະກອບ ແລະ ປະເດັນທີ່ຕ້ອງພິສູດ"



ມາດຕາ 130 ຂອງປະມວນກົດໝາຍອາຍາກ່ຽວກັບການຟອກເງິນສອດຄ່ອງກັບຫຼັກການສາກົນ ກ່ຽວກັບການຕ້ານການຟອກເງິນ. ຫຼັກຖານທີ່ສາມາດນຳໃຊ້ໃນການດຳເນີນຄະດີການຟອກເງິນ ລວມມີຫຼັກຖານທາງກົງ, ຫຼັກຖານທາງອ້ອມ ແລະ ຫຼັກຖານທີ່ໄດ້ມາຈາກການອະນຸມານ. ສິ່ງຫຍຸ້ງຍາກທີ່ເຈົ້າໜ້າທີ່ຕ້ອງພົບພໍ້ ແມ່ນການຕັດສິນໃຈວ່າຈະດຳເນີນການສືບສວນ-ສອບສວນການກະທຳຜິດຕົ້ນ ແລະ ການສືບສວນ-ສອບສວນທາງການເງິນໃນເວລາດຽວກັນ ຫຼື ບໍ? ມັນຈຳເປັນທີ່ຈະຕ້ອງມີການດຳເນີນຄະດີການກະທຳຜິດຕົ້ນກ່ອນ ແລ້ວຈຶ່ງດຳເນີນຄະດີການຟອກເງິນບໍ? ບັນຫາດັ່ງກ່າວນີ້ ຈະຖືກນຳໄປທົດສອບຢູ່ໃນການປະຕິບັດກົດໝາຍຂອງ ສປປ ລາວ.

# ແບບເຝິກຫັດພາກປະຕິບັດຕົວຈິງ – ກໍລະນີສຶກສາ

## ທ່ານ ນາງ ອາລີນາ ທີມູສ໌ ແລະ ທ່ານ ຄຣິສ ແບັດ

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
ທີ່ປຶກສາລະດັບພາກພື້ນ, ອົງການສະຫະປະຊາຊາດຕ້ານສິ່ງເສບຕິດ ແລະ ອາຊະຍາກຳ (UNODC)




ເພື່ອເສີມສ້າງຄວາມອາດສາມາດຂອງ ບັນດາເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໃນການສືບສວນ-ສອບສວນຄະດີ ໃນພາກປະຕິບັດຕົວຈິງ, ໃນກຸ່ມກິດຈະກຳ ໄດ້ມີການນຳສະເໜີກໍລະນີສຶກສາຫົວຂໍ້ການຄ້າມະນຸດ ໂດຍຜູ້ເຂົ້າຮ່ວມແຕ່ລະແຂວງໄດ້ສົນທະນາກ່ຽວກັບການວາງແຜນ ເພື່ອກະກຽມການສຳພາດຜູ້ຖືກເຄາະຮ້າຍ ພ້ອມທັງແລກປ່ຽນເຊິ່ງກັນແລະ ກັນ ກ່ຽວກັບແບບປະຕິບັດທີ່ດີທີ່ສຸດ ແລະ ເຕັກນິກໃນການສືບສວນ-ສອບສວນຄະດີ.



ການຈຳລອງການສຳພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ
ບັນດາເຈົ້າໜ້າທີ່ເຊິ່ງເປັນຕົວແທນຈາກອົງການໄອຍະການປະຊາຊົນສູງສຸດ ແລະ ຫ້ອງການຕຳຫຼວດປ້ອງກັນຄວາມສະຫງົບແຂວງຄຳມ່ວນ ໄດ້ມີບົດບາດປະກອບສ່ວນເຂົ້າໃນກິດຈະກຳ ການຈຳລອງສະຖານະການສຳພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ການຈຳລອງການສຳພາດຜູ້ຖືກເຄາະຮ້າຍນີ້ ເຮັດໃຫ້ເຈົ້າໜ້າທີ່ສາມາດສະແດງເຖິງສິ່ງທ້າທາຍ ແລະ ຖອດຖອນເອົາເຕັກນິກທີ່ສາມາດນຳໃຊ້ເພື່ອເກັບກຳຂໍ້ມູນຈາກການດຳເນີນການສຳພາດ ບໍ່ວ່າຈະເປັນຜູ້ຖືກເຄາະຮ້າຍ, ຜູ້ຖືກສົງໄສ ແລະ ພະຍານ.





# ພາກຄຳຖາມ ແລະ ຄຳຕອບ

## ທ່ານ ວົງເພັດ ແກ້ວສີນວນ,

ຜູ້ພິພາກສາ ສານປະຊາຊົນ ແຂວງຊຽງຂວາງ



**ຄຳຖາມ:** ໃນກໍລະນີທີ່ເກີດຂຶ້ນຕົວຈິງ ເຊິ່ງຜູ້ຖືກເຄາະຮ້າຍໄດ້ຖືກຂົນສົ່ງໄປປະເທດຈີນ ແຕ່ໄດ້ຫຼົບໜີຈາກຜູ້ຄ້າມະນຸດ ແລະ ລາຍງານຕໍ່ເຈົ້າໜ້າທີ່, ກໍລະນີດັ່ງກ່າວຖືວ່າເປັນຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດສະຖານການຄ້າມະນຸດບໍ ຖ້າຫາກຍັງບໍ່ທັນມີການຂູດຮີດເກີດຂຶ້ນ?

**ຄຳຕອບ:** ທ່ານ ວິລະສິດ ສິງກາວົງໄຊ ຕອບວ່າ ກໍລະນີດັ່ງກ່າວ ຖືວ່າຢູ່ໃນຂັ້ນຕອນຄວາມພະຍາຍາມໃນການກະທຳຜິດສະຖານການຄ້າມະນຸດ ເນື່ອງຈາກວ່າມີການຂົນສົ່ງຜູ້ຖືກເຄາະຮ້າຍໄປສູ່ປະເທດຈຸດໝາຍປາຍທາງ ເຖິງແມ່ນວ່າຈະຍັງບໍ່ທັນມີການຂູດຮີດກໍຕາມ ໂດຍອີງຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ໃນ ມາດຕາ 3 ຂອງຄຳແນະນຳຮ່ວມກ່ຽວກັບການດຳເນີນຄະດີ, ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ.

## ທ່ານ ນາງ ເມັດມະນີ ວັນນະສີ,

ຮອງຫົວໜ້າພະແນກຮ່ວມມືກັບຕ່າງປະເທດ, ກົມແຜນການ ແລະ ຮ່ວມມືກັບຕ່າງປະເທດ
ອົງການໄອຍະການປະຊາຊົນສູງສຸດ



**ຄຳຖາມ:** ສປປ ລາວ ຍັງປະເຊີນກັບສິ່ງທ້າທາຍຫຼາຍອັນ ໃນຂອບເຂດການຈັດຕັ້ງປະຕິບັດ ວຽກງານການຮ່ວມມືຍຸຕິທຳລະຫວ່າງປະເທດ ອັນເນື່ອງມາຈາກຄວາມອາດສາມາດທາງດ້ານເຕັກນິກສະເພາະຍັງຈຳກັດ ແລະ ຂາດການປະສານງານລະຫວ່າງໜ່ວຍງານຕ່າງໆ, ສປປ ລາວ ຄວນມີວິທີການແກ້ໄຂແນວໃດຕື່ມ?

**ຄຳຕອບ:** ທ່ານ ຄຣິສ ແບັດ, ທີ່ປຶກສາໃນລະດັບພາກພື້ນຈາກອົງການ UNODC ໄດ້ມີຄຳສະເໜີແນະວ່າ: ໃຫ້ມີການສ້າງກຸ່ມ ຫຼື ໜ່ວຍງານຂັ້ນສູນກາງທີ່ປະກອບດ້ວຍເຈົ້າໜ້າທີ່ຈາກອົງການຈັດຕັ້ງລັດຕ່າງໆທີ່ກ່ຽວຂ້ອງ ເຊັ່ນ: ເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການ ແລະ ເຈົ້າໜ້າທີ່ຕຳຫຼວດ ສຳລັບການຕິດຕໍ່ປະສານງານກັບຕ່າງປະເທດ. ເຈົ້າໜ້າທີ່ ຫຼື ອົງການຈັດຕັ້ງລັດທີ່ກ່ຽວຂ້ອງສາມາດຂໍຄວາມຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນໃນການພັດທະນາ ແລະ ເສີມສ້າງຄວາມອາດສາມາດສະເພາະທາງດ້ານວຽກງານການຮ່ວມມືຍຸຕິທຳລະຫວ່າງປະເທດ.

## ທ່ານ ພອນປະສິດ ຄຳສະຫວັດ,

ຮອງຫົວໜ້າພະແນກອາຍາ ອົງການໄອຍະການປະຊາຊົນ ພາກກາງ



**ຄຳຖາມ:** ຈາກປະສົບການສືບສວນ-ສອບສວນ ພາຍໃນປະເທດຂອງ ທ່ານ ຟາຕູຣາຊັນ, ທ່ານມີເຕັກນິກການສືບສວນແນວໃດ ເພື່ອທີ່ຈະຮູ້ໄດ້ວ່າຊັບສິນທີ່ຜູ້ກະທຳຜິດຄອບຄອງຢູ່ມີຫຍັງແດ່ ແລະ ບຸກຄົນນັ້ນມີຊັບສິນຫຍັງຕື່ມ ທັງພາຍໃນປະເທດ ແລະ ຕ່າງປະເທດ ໂດຍສະເພາະໃນກໍລະນີທີ່ຜູ້ຖືກຫາບໍ່ໃຫ້ການຮ່ວມມື. ພາຍໃນປະເທດຂອງທ່ານໄດ້ມີການກວດກາ ແລະ ຊອກຫາຊັບສິນດັ່ງກ່າວນັ້ນໄດ້ແນວໃດ?

**ຄຳຕອບ:** ທ່ານ ຟາຕູຣາຊັນ ຕອບວ່າ ພາຍໃນປະເທດຂອງຕົນແມ່ນນຳໃຊ້ແຫຼ່ງຂໍ້ມູນເປີດ ແລະ ບົດບັນທຶກທະບຽນລົດ, ທີ່ດິນ ແລະ ບັນຊີທະນາຄານ. ໂດຍພື້ນຖານແລ້ວ ເຈົ້າໜ້າທີ່ຈະພະຍາຍາມຕິດຕາມການເຄື່ອນໄຫວຂອງເງິນ ນັບຕັ້ງແຕ່ບົດບັນທຶກທະນາຄານ ແລະ ສາຍພົວພັນກັບຄອບຄົວຂອງຜູ້ຖືກສົງໄສ, ການເຮັດທຸລະກຳ ຫຼື ການໂອນເງິນ. ບາງຄັ້ງ, ມັນອາດເປັນສິ່ງທີ່ຍາກທີ່ຈະກຳນົດຊັບສິນດັ່ງກ່າວ ເພື່ອທີ່ຈະເຮັດໃຫ້ສາມາດຮູ້ໄດ້ວ່າຊັບສິນນັ້ນກ່ຽວຂ້ອງກັບການຟອກເງິນ ຫຼື ບໍ ເຊັ່ນ: ໃນປະເທດອັງກິດ ແລະ ຝຣັ່ງ ສ່ວນໃຫຍ່ມັກຈະສາມາດພິສູດໄດ້ວ່າມີການຟອກເງິນເກີດຂຶ້ນ ຖ້າຫາກວ່າຜູ້ຖືກສົງໄສບໍ່ສາມາດອະທິບາຍເຫດຜົນຕໍ່ຄວາມຮັ່ງມີຂອງຕົນ ຫຼື ຢັ້ງຢືນທີ່ມາຂອງຊັບສິນເຫຼົ່ານັ້ນໄດ້ ເຊິ່ງສ່ວນຫຼາຍເຈົ້າຂອງຊັບສິນມັກຈະບໍ່ສາມາດອະທິບາຍໄດ້ວ່າຊັບສິນດັ່ງກ່າວນັ້ນມາຈາກໃສ. ສະນັ້ນ, ໃນກໍລະນີນີ້ ຈະຖືໄດ້ວ່າມີການຟອກເງິນເກີດຂຶ້ນ.

## ທ່ານ ອະພິສິດ ເທບພະສອນ,

ພະນັກງານວິຊາການ ອົງການໄອຍະການປະຊາຊົນ ແຂວງຄຳມ່ວນ

**ຄຳຖາມ:** ໃນກໍລະນີທີ່ທະນາຄານລະງັບບັນຊີລູກຄ້າເນື່ອງຈາກວ່າມີການໂອນເງິນເຂົ້າອອກຕ່າງປະເທດຫຼາຍຄັ້ງ, ເຊິ່ງຜູ້ກ່ຽວອາດກະທຳຜິດທາງດ້ານການເງິນ ແຕ່ອ້າງວ່າຕົນເຮັດທຸລະກິດຮ້ານຂາຍຄຳ ແລະ ແລກປ່ຽນເງິນຕາ, ຈຶ່ງໄດ້ຮ້ອງຟ້ອງທະນາຄານວ່າມີການລະເມີດສິດສ່ວນບຸກຄົນ ໂດຍການກວດບັນຊີ ແລະ ລະງັບບັນຊີ. ຕໍ່ກັບບັນຫານີ້ ໃນປະເທດຂອງທ່ານເຈົ້າໜ້າທີ່ຈະກວດສອບໄດ້ແນວໃດວ່າ ການເຄື່ອນໄຫວບັນຊີນັ້ນຖືກຕ້ອງ ຫຼື ຜິດກົດໝາຍ ແລະ ເຈົ້າໜ້າທີ່ຈະຍຶດຖືເອົາຂໍ້ມູນຈາກທະນາຄານພຽງຝ່າຍດຽວບໍ?



**ຄຳຕອບ:** ທ່ານ ຄຣິສ ແບັດ ກ່າວວ່າ ເມື່ອດຳເນີນການສືບສວນ-ສວບສວນ, ການທີ່ຈະລະງັບບັນຊີໄດ້ຕ້ອງມີເຫດຜົນເບື້ອງຫຼັງທີ່ໜັກແໜ້ນ. ມັນຈຳເປັນທີ່ຈະຕ້ອງມີຫຼັກຖານຂໍ້ມູນພຽງພໍຕໍ່ສານຈຶ່ງສາມາດລະງັບບັນຊີໄດ້. ຫຼັກຖານເຫຼົ່ານັ້ນ ສາມາດໄດ້ມາຈາກທະນາຄານ ໂດຍອີງຕາມລະບຽບການ ທະນາຄານຈະຕ້ອງຮູ້ຈັກລູກຄ້າຂອງຕົນ (KYC) ເຊິ່ງກຳນົດໃຫ້ທະນາຄານເກັບກຳຂໍ້ມູນສ່ວນຕົວຂອງຜູ້ເປີດບັນຊີທຸກຄົນ ເຊັ່ນ: ບັດປະຈຳຕົວ, ທີ່ຢູ່ ແລະ ອາຊີບ. ຕົວຢ່າງ: ໃນກໍລະນີທີ່ ລາຍຮັບຂອງຜູ້ຖືກສົງໄສມີຫຼາຍເກີນຄວາມເປັນຈິງ ໂດຍທຽບກັບອາຊີບທີ່ຜູ້ກ່ຽວແຈ້ງກັບທະນາຄານ ແມ່ນຖືວ່າເປັນສິ່ງທີ່ໜ້າສົງໄສເທົ່າ. ສະນັ້ນ, ທະນາຄານຈຶ່ງສາມາດລະງັບບັນຊີໄວ້ກ່ອນໄດ້. ທະນາຄານມີໜ້າທີ່ຕິດຕາມ, ກວດສອບ ແລະ ລາຍງານທຸລະກຳທີ່ໜ້າສົງໄສໃນບັນຊີ ເຊິ່ງອາດຈະກ່ຽວຂ້ອງກັບການກະທຳຜິດ ເຊັ່ນ: ການຟອກເງິນ ເຊິ່ງສ່ວນໃຫຍ່ຈະມີການນຳເອົາເງິນຈຳນວນຫຼາຍທີ່ໄດ້ຈາກການກະທຳຜິດມາຝາກໄວ້ໃນບັນຊີທະນາຄານ ແລະ ຫຼັງຈາກນັ້ນ ກໍເຄື່ອນຍ້າຍເງິນດັ່ງກ່າວ ເພື່ອໃຫ້ເບິ່ງຄືວ່າເປັນເງິນທີ່ໄດ້ມາຈາກແຫຼ່ງທີ່ຖືກກົດໝາຍ. ເຈົ້າໜ້າທີ່ຕ້ອງເບິ່ງເພີ່ມເຕີມກ່ຽວກັບຊັບສິນທີ່ມີມູນຄ່າສູງທີ່ຜູ້ຖືກສົງໄສເປັນເຈົ້າຂອງ ເຊັ່ນ: ທີ່ດິນ, ຄຳ ຫຼື ອະສັງຫາລິມະຊັບ.

# ການແຂ່ງຂັນຖາມ-ຕອບຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ



ຜູ້ຊະນະເລີດສຳລັບກິດຈະກຳການຕອບຄຳຖາມຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ
ໃນກອງປະຊຸມລະດັບພາກຄັ້ງທີ II ທີ່ ແຂວງຄຳມ່ວນ
ທ່ານ ນາງ ອ້ອຍຈັນ ວົງຈັນແດງ, ຫົວໜ້າພະແນກຄະດີແພ່ງ
ອົງການໄອຍະການປະຊາຊົນເຂດ 1 ແຂວງຄຳມ່ວນ

www.ilsta.org



# ກອງປະຊຸມລະດັບພາກ ຄັ້ງທີ III ສຳລັບບັນດາແຂວງພາກໃຕ້ ທີ່ ແຂວງ ຈຳປາສັກ

ກອງປະຊຸມລະດັບພາກຄັ້ງທີ III ໄດ້ຈັດຂຶ້ນທີ່ ນະຄອນປາກເຊ, ແຂວງຈຳປາສັກ ໃນລະຫວ່າງວັນທີ 23 – 25 ພະຈິກ 2020 ໂດຍມີພະນັກງານຈາກອົງການໄອຍະການປະຊາຊົນ, ໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ອົງການຕຸລາການຂອງແຂວງວຽງຈັນ ແລະ ບັນດາແຂວງພາກໃຕ້ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້: ແຂວງສະຫວັນນະເຂດ, ແຂວງສາລະວັນ, ແຂວງອັດຕະປື, ແຂວງຈຳປາສັກ ແລະ ແຂວງເຊກອງ.







# ການກ່າວຄຳໂອວາດ

## ທ່ານ ບຸນຍັງ ຈັນດາລາສານ

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ



ອາຊະຍາກຳຂ້າມຊາດ, ໂດຍສະເພາະການຄ້າມະນຸດ ແລະ ການຟອກເງິນເປັນໄພຂົ່ມຂູ່ຕໍ່ສິດທິມະນຸດ ແລະ ຊັບສິນຂອງປະຊາຊົນ ພ້ອມທັງເປັນອຸປະສັກຕໍ່ການຈະເລີນເຕີບໂຕທາງດ້ານເສດຖະກິດພາຍໃນ ແລະ ສາກົນ. ໃນປີ 2020 ນີ້, ອາຊະຍາກຳດັ່ງກ່າວບໍ່ແມ່ນບັນຫາໃໝ່ສຳລັບ ສປປ ລາວ. ດ້ວຍເຫດນີ້, ໜ່ວຍງານບັງຄັບໃຊ້ກົດໝາຍຕ້ອງຮ່ວມມືກັນຢ່າງຈິງຈັງເພື່ອຕ້ານ ແລະ ສະກັດກັ້ນອາຊະຍາກຳເຫຼົ່ານີ້ ໂດຍສອດຄ່ອງຕາມກົດໝາຍ. ສປປ ລາວ ໄດ້ຮັບຮອງເອົາ ປະມວນກົດໝາຍອາຍາ ສະບັບປັບປຸງປີ 2017 ພ້ອມທັງກົດໝາຍ, ຄຳແນະນຳອື່ນໆທີ່ກ່ຽວຂ້ອງກັບການຟອກເງິນ ແລະ ການຄ້າມະນຸດ ເຊິ່ງເປັນບ່ອນອີງພື້ນຖານໃຫ້ແກ່ການດຳເນີນຄະດີ ແລະ ການລົງໂທດຜູ້ກະທຳຜິດ. ຜ່ານມາບໍ່ດົນນີ້, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດໄດ້ອອກ ຄຳແນະນຳຮ່ວມກ່ຽວກັບການດຳເນີນຄະດີອາຍາ, ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ. ກອງປະຊຸມດັ່ງກ່າວນີ້ ເປັນໂອກາດທີ່ດີໃຫ້ແກ່ການເສີມສ້າງຄວາມເຂັ້ມແຂງໃນຂອດປະສານງານ ແລະ ການຮ່ວມມືລະຫວ່າງໜ່ວຍງານບັງຄັບໃຊ້ກົດໝາຍໃນຂອບເຂດທົ່ວປະເທດນັບແຕ່ຂັ້ນຮາກຖານຈົນໄປເຖິງຂັ້ນສູນກາງ ເພື່ອຮັບປະກັນການຈັດຕັ້ງປະຕິບັດກົດໝາຍຢ່າງເປັນເອກະພາບກັນໃນພາກປະຕິບັດຕົວຈິງ.

## ທ່ານຣິຊາດ ຟີລິບປາດ

ປະທານສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ



ການຍຸຕິກະແສການເຄື່ອນໄຫວທີ່ຜິດກົດໝາຍ ຂອງຂະບວນການກໍ່ອາຊະຍາກຳເປັນຕົ້ນແມ່ນ ການຟອກເງິນ, ການຄ້າມະນຸດ, ການຄ້າຂາຍສິ່ງເສບຕິດ, ການຄ້າຂາຍໄມ້ ແລະ ສັດປ່າທີ່ຜິດກົດໝາຍ ເປັນສິ່ງທີ່ສຳຄັນຕໍ່ການພັດທະນາແບບຍືນຍົງ. ອາຊະຍາກຳທີ່ມີການຈັດຕັ້ງ ໄດ້ປັບປ່ຽນໄປຕາມສະພາບການທາງດ້ານເສດຖະກິດ ແລະ ຕຸລາການ ໂດຍຊອກຫາຊ່ອງວ່າງທາງດ້ານໂຄງສ້າງ ແລະ ພູມສາດຂອງປະເທດເພື່ອຈະດຳເນີນ ແລະ ຂະຫຍາຍກິດຈະກຳທີ່ຜິດກົດໝາຍຂອງພວກເຂົາ. ໃນໄລຍະນີ້, ອາຊະຍາກຳທີ່ມີການຈັດຕັ້ງຍັງສາມາດເກີດຂຶ້ນຂ້າມແດນໄດ້ຢ່າງງ່າຍດາຍ ເຖິງແມ່ນວ່າດ່ານຊາຍແດນຂອງປະເທດ ຍັງຖືກປິດໄວ້ເນື່ອງຈາກພະຍາດໂຄວິດ-19 ເຊິ່ງຜ່ານມາກໍຍັງມີການກວດຈັບ, ຍຶດເອົາສິ່ງເສບຕິດໄດ້ຈຳນວນຫຼາຍຄັ້ງ. ຍ້ອນແນວນັ້ນ, ການຮ່ວມມືສາກົນ ແລະ ການເພີ່ມທະວີການແລກປ່ຽນຂໍ້ມູນທີ່ວ່ອງໄວລະຫວ່າງບັນດາລັດເປັນສິ່ງທີ່ສຳຄັນທີ່ສຸດ.

ໃນເລື່ອງການຄ້າມະນຸດ, ການໃຫ້ຖືພາແທນຄົນອື່ນ ເຊິ່ງເອີ້ນວ່າ ການອຸ້ມບຸນແມ່ນມີສ່ວນກ່ຽວຂ້ອງກັບການຄ້າມະນຸດ ເຊິ່ງບໍ່ໄດ້ຖືກກຳນົດຢູ່ໃນຮູບແບບຂອງການຂູດຮີດໃນສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ. ດັ່ງນັ້ນ, ຈຶ່ງເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງໄດ້ພິຈາລະນາການຮ່າງກົດໝາຍກ່ຽວກັບຈັນຍາບັນທາງວິທະຍາສາດການແພດ ໂດຍກວມເອົາບັນຫາການປິ່ນປົວທາງການແພດຢ່າງຮອບດ້ານ ພ້ອມທັງການແຊກແຊງເຂົ້າໃນກິດຈະກຳທາງການແພດເພື່ອຈຸດປະສົງຫາລາຍໄດ້.

# ຫົວຂໍ້ການນຳສະເໜີ

## ທ່ານ ພັທ ຖາວອນ ແກ້ວພິລາ

ຫົວໜ້າພະແນກສອບສວນ, ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ
"ການເຄື່ອນໄຫວວຽກງານຕ້ານການຄ້າມະນຸດຢູ່ ສປປ ລາວ"



ການຂູດຮີດມີຫຼາຍຮູບແບບທີ່ແຕກຕ່າງກັນ ເຊັ່ນ: ແຮງງານບັງຄັບ, ການຂູດຮີດທາງເພດ, ການແຕ່ງດອງແອບແຝງ ແລະ ການໃຫ້ຖືພາແທນຄົນອື່ນ. ການໃຫ້ຖືພາໄດ້ກາຍເປັນບັນຫາທີ່ຕ້ອງເອົາໃຈໃສ່ຢູ່ໃນພາກພື້ນ ເຊິ່ງທີ່ຜ່ານມາໄດ້ເກີດຂຶ້ນຢູ່ປະເທດໄທ, ຈີນ ແລະ ກຳປູເຈຍ. ເນື່ອງຈາກບັນດາປະເທດໃກ້ຄຽງໄດ້ກຳນົດການໃຫ້ຖືພາເປັນການກະທຳຜິດຈຶ່ງເຮັດໃຫ້ ສປປ ລາວ ກາຍເປັນປະເທດປາຍທາງຂອງຜູ້ຖືກເຄາະຮ້າຍ. ຂະບວນການໃຫ້ຖືພານີ້ ເປັນສິ່ງທ້າທາຍໃໝ່ ເຊິ່ງຈຳເປັນຕ້ອງໄດ້ຮັບການແກ້ໄຂຢ່າງທັນການຈາກບັນດາເຈົ້າໜ້າທີ່ ໂດຍສະເພາະໜ່ວຍງານຕ້ານການຄ້າມະນຸດ.

ການນຳໃຊ້ວິທີການຮູບແບບໃໝ່ເລື້ອຍໆຂອງຜູ້ຄ້າມະນຸດນີ້ ໄດ້ສ້າງບັນຫາທີ່ຫຍຸ້ງຍາກໃຫ້ແກ່ເຈົ້າໜ້າທີ່. ສະນັ້ນ, ມັນຈຶ່ງມີຄວາມສຳຄັນທີ່ຈະຕ້ອງໄດ້ເສີມສ້າງການຮ່ວມມືທາງດ້ານອາຍາທີ່ເຂັ້ມແຂງລະຫວ່າງບັນດາເຈົ້າໜ້າທີ່ ເພື່ອດຳເນີນຄະດີການຄ້າມະນຸດຢ່າງມີປະສິດທິພາບ.

## ທ່ານ ຈອນ ຄອນນໍລີ

ຜູ້ອຳນວຍການສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
"ການກະກຽມສຳລັບການສຳພາດພະຍານ/ຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກສົງໄສ (PEACE)"



ທ່ານ ຄອນນໍລີ ໄດ້ນຳສະເໜີວິທີການສຳພາດໃນຮູບແບບ PEACE ເຊິ່ງປະກອບມີ 5 ຂັ້ນຕອນທີ່ສຳຄັນຄື: 1) ການກະກຽມ ແລະ ວາງແຜນ (Preparation and planning); 2) ດຳເນີນການສຳພາດໃນຮູບແບບສົນທະນາ ແລະ ອະທິບາຍເຫດຜົນ (Engage and explain); 3) ບັນທຶກ, ຊີ້ແຈງ ແລະ ສອບຖາມ (Account, clarify and challenge; 4) ສິ້ນສຸດການສຳພາດ (Closure); ແລະ 5) ປະເມີນຜົນ (Evaluation).

ໃນການດຳເນີນການສຳພາດຢ່າງມີປະສິດທິພາບ ມັນຈຳເປັນທີ່ເຈົ້າໜ້າທີ່ຈະຕ້ອງມີທັກສະໃນການຕັ້ງຄຳຖາມ. ວິທີການແບບຮູບຈອຍ (Funnel Approach) ເປັນເຕັກນິກການຕັ້ງຄຳຖາມທີ່ສຳຄັນ ເພື່ອທີ່ຈະສາມາດເກັບກຳເອົາຂໍ້ມູນໃຫ້ໄດ້ຫຼາຍທີ່ສຸດຈາກການສຳພາດ. ສິ່ງທີ່ສຳຄັນສຳລັບເຈົ້າໜ້າທີ່ ແມ່ນຈະຕ້ອງສັງເກດເບິ່ງພຶດຕິກຳ ຫຼື ການສະແດງທ່າທີຂອງພະຍານ/ຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກສົງໄສ ໃນລະຫວ່າງການສຳພາດເພື່ອໃຫ້ຮູ້ວ່າພວກເຂົາກຳລັງບອກຂໍ້ມູນທີ່ເປັນຄວາມຈິງ ຫຼື ບໍ່.



## ທ່ານ ຄຣິສ ແບັດ

ທີ່ປຶກສາດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນລະດັບພາກພື້ນ, ອົງການສະຫະປະຊາຊາດຕ້ານສິ່ງເສບຕິດ ແລະ ອາຊະຍາກຳ (UNODC)

"ກົນໄກຮ່ວມມືສາກົນທີ່ບໍ່ເປັນທາງການໃນເລື່ອງຄະດີອາຍາ"



ກົນໄກການຮ່ວມມືສາກົນແບບບໍ່ເປັນທາງການ ປະກອບມີ: ໜ່ວຍງານຂໍ້ມູນຕ້ານການຟອກເງິນ (FIU-FIU), ອົງການເກັບກູ້ຊັບສິນພາກພື້ນອາຊີ-ປາຊີຟິກ (ARIN-AP), ອົງການຕຳຫຼວດສາກົນ (INTERPOL), ອົງການຕຳຫຼວດເອີຣົບ (EUROPOL) ແລະ ສະມາຄົມເຈົ້າໜ້າທີ່ປະຕິບັດກົດໝາຍລະຫວ່າງປະເທດ (FLEC). ການແລກປ່ຽນຂໍ້ມູນແບບບໍ່ເປັນທາງການມີຄວາມສຳຄັນຕໍ່ວຽກງານຕ້ານການຟອກເງິນ ໂດຍສະເພາະ ການດຳເນີນການສືບສວນ-ສອບສວນຄະດີການຟອກເງິນ. ທ່ານ ແບັດ ສະໜັບສະໜູນໃຫ້ເຈົ້າໜ້າທີ່ລາວນຳໃຊ້ກົນໄກການແລກປ່ຽນຂໍ້ມູນທີ່ບໍ່ເປັນທາງການກ່ອນທີ່ຈະດຳເນີນການຮ້ອງຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍ.

"ພາລະບົດບາດຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ (FIU) ໂດຍເນັ້ນໜັກໃສ່ການລາຍງານກ່ຽວກັບການເຮັດທຸລະກຳທີ່ໜ້າສົງໄສ/ການລາຍງານທຸລະກຳເງິນສົດ"

ໜ່ວຍງານຂໍ້ມູນຕ້ານການຟອກເງິນ (FIU) ມີພາລະບົດບາດສຳຄັນໃນການສະໜອງຂໍ້ມູນກ່ຽວກັບຜູ້ຖືກສົງໄສໃນການຟອກເງິນ ແລະ ການກະທຳຜິດຕົ້ນ. ຂໍ້ສະເໜີແນະທີ 29 ຂອງຄະນະປະຕິບັດງານສະເພາະກິດເພື່ອດຳເນີນມາດຕະການທາງການເງິນກ່ຽວກັບການຟອກເງິນ (FATF) ໄດ້ກຳນົດໃຫ້ໜ່ວຍງານຂໍ້ມູນຕ້ານການຟອກເງິນເປັນອົງການໃຈກາງໃນການຮັບເອົາລາຍງານທຸລະກຳທີ່ໜ້າສົງໄສ (STR) ແລະ ຂໍ້ມູນອື່ນໆລວມທັງລາຍງານທຸລະກຳເງິນສົດ (CTR), ການໂອນເງິນ ແລະ ການແຈ້ງເງິນສົດ. ໜ່ວຍງານຂໍ້ມູນຕ້ານການຟອກເງິນປະກອບມີ 3 ປະເພດ. ສຳນັກງານຂໍ້ມູນຕ້ານການຟອກເງິນພາຍໃຕ້ທະນາຄານກາງແຫ່ງ ສປປ ລາວ ແມ່ນຕົວຢ່າງຮູບແບບໜ່ວຍງານປະເພດບໍລິຫານ. ໃນບາງປະເທດ, ໜ່ວຍງານຂໍ້ມູນຕ້ານການຟອກເງິນມີອຳນາດບັງຄັບໃຊ້ກົດໝາຍ ເຊັ່ນ: ເຈົ້າໜ້າທີ່ຕຳຫຼວດ ແລະ ລວມທັງໜ່ວຍງານປະເພດທີ່ມີອຳນາດດຳເນີນການສືບສວນ-ສອບສວນ.

ໜ່ວຍງານຂໍ້ມູນຕ້ານການຟອກເງິນສາມາດສະໜອງແຫຼ່ງຂໍ້ມູນເຊັ່ນ: ແຜນວາດສະແດງການເຊື່ອມໂຍງ ແລະ ຜົນການວິເຄາະບັນຊີທະນາຄານ ການເຮັດທຸລະກຳ, ທີ່ຢູ່ ແລະ ສາຍພົວພັນຂອງຜູ້ຖືກສົງໄສກັບ ບຸກຄົນ ຫຼື ນິຕິບຸກຄົນທີ່ກ່ຽວຂ້ອງ.




ເມື່ອສົງໄສວ່າມີການຟອກເງິນ ຫຼື ການກະທຳຜິດຕົ້ນໃດໜຶ່ງ, ເຈົ້າໜ້າທີ່ສາມາດ ເກັບກຳຂໍ້ມູນທີ່ກ່ຽວຂ້ອງກັບຜູ້ຖືກສົງໄສ ຫຼື ບຸກຄົນອື່ນທີ່ສົງໄສວ່າມີສ່ວນຮ່ວມໃນການກະທຳຜິດຢູ່ນອກປະເທດໂດຍຜ່ານເຄືອຂ່າຍການຮ່ວມມືລະຫວ່າງ ໜ່ວຍງານຂໍ້ມູນຕ້ານການຟອກເງິນດັ່ງກ່າວນີ້ໄດ້.

## ທ່ານ ວິລະສິດ ສິງກາວົງໄຊ

ຮອງຫົວໜ້າອົງການໄອຍະການປະຊາຊົນພາກກາງ

"ຄຳແນະນຳຮ່ວມກ່ຽວກັບການດຳເນີນຄະດີ, ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ"



ທ່ານ ວິລະສິດ ໄດ້ນຳສະເໜີ ຄຳແນະນຳຮ່ວມກ່ຽວກັບການດຳເນີນຄະດີ ຂັ້ນຕອນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນສະຖານການຄ້າມະນຸດ ເຊິ່ງເປັນນິຕິກຳທີ່ສຳຄັນຕໍ່ການດຳເນີນຄະດີການຄ້າມະນຸດ. ທ່ານໄດ້ໄຈ້ແຍກຄວາມແຕກຕ່າງ ແລະ ອົງປະກອບຂອງການກະກຽມ ແລະ ຄວາມພະຍາຍາມໃນການກໍ່ການກະທຳຜິດສະຖານການຄ້າມະນຸດອີງຕາມມາດຕາ 215 ຂອງປະມວນກົດໝາຍອາຍາ. ການກຳນົດຂັ້ນຕອນຂອງການກະກຽມ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃນກໍລະນີທີ່ຜູ້ຖືກເຄາະຮ້າຍຍັງບໍ່ທັນຖືກຂູດຮີດ ເປັນສິ່ງທີ່ຈຳເປັນເພື່ອທີ່ຈະສາມາດຊອກຫາ ແລະ ສະກັດກັ້ນການກະທຳຜິດໄວ້ກ່ອນ.

## ທ່ານ ນາງ ເມັດມະນີ ວັນນະສີ

ຮອງຫົວໜ້າພະແນກຮ່ວມມືກັບຕ່າງປະເທດ, ກົມແຜນການ ແລະ ຮ່ວມມືກັບຕ່າງປະເທດ ອົງການໄອຍະການປະຊາຊົນສູງສຸດ

"ການຮ່ວມມືທາງດ້ານຍຸຕິທຳລະຫວ່າງປະເທດໃນ ສປປ ລາວ"



ການຮ່ວມມືຍຸຕິທຳລະຫວ່າງປະເທດແບ່ງອອກເປັນ 3 ຮູບແບບຄື: ການຮ່ວມມືຍຸຕິທຳໃນເລື່ອງຄະດີອາຍາ, ການສົ່ງຜູ້ຮ້າຍຂ້າມແດນ ແລະ ການໂອນຕົວນັກໂທດ. ຈຸດປະສົງຂອງການຮ່ວມມືດັ່ງກ່າວ ກໍແມ່ນເພື່ອ ເອື້ອອຳນວຍໃຫ້ແກ່ການເກັບກຳຂໍ້ມູນຫຼັກຖານ ແລະ ການຈັບກຸມຕົວຜູ້ກະທຳຜິດຢູ່ນອກດິນແດນຂອງ ສປປ ລາວ. ສິ່ງດັ່ງກ່າວສາມາດຮັບປະກັນການດຳເນີນຄະດີ ບົນພື້ນຖານຫຼັກການຕ່າງຕອບແທນ. ສະພາແຫ່ງຊາດໄດ້ຮັບຮອງເອົາກົດໝາຍວ່າດ້ວຍການຮ່ວມມືຍຸຕິທຳລະຫວ່າງປະເທດອັນເປັນຂົດໝາຍສຳຄັນຂອງ ສປປ ລາວ. ກົດໝາຍສະບັບນີ້ກຳນົດໃຫ້ ອົງການໄອຍະການປະຊາຊົນສູງສຸດ ເປັນອົງການໃຈກາງໃນການຊີ້ນຳ-ນຳພາ ແລະ ກະຊວງປ້ອງກັນຄວາມສະຫງົບເປັນຜູ້ຈັດຕັ້ງປະຕິບັດຄຳຮ້ອງຂໍທີ່ສົ່ງມາຈາກຕ່າງປະເທດ ຫຼື ສົ່ງອອກໄປຍັງຕ່າງປະເທດ.

## ທ່ານ ສຸພາສິດ ລໍວັນໄຊ

ຮອງຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ

"ຫຼັກຖານໃນຄະດີອາຍາ ຕາມກົດໝາຍລາວ"



ໃນມາດຕາ 28 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ຫຼັກຖານແບ່ງອອກເປັນ 3 ປະເພດໄດ້ແກ່: ຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານຈາກບຸກຄົນ. ທ່ານ ສຸພາສິດ ໄດ້ອະທິບາຍຫຼັກຖານທຸກປະເພດຢ່າງລະອຽດພ້ອມທັງໃຫ້ຄຳແນະນຳກ່ຽວກັບວິທີການເກັບກຳຫຼັກຖານທີ່ຖືກຕ້ອງຕາມຄຸນລັກສະນະສະເພາະຂອງຫຼັກຖານແຕ່ລະປະເພດ. ຫຼັກຖານເປັນເຄື່ອງມືທີ່ສຳຄັນໃນການພິສູດຄວາມຈິງ ແລະ ຄວາມຜິດຂອງຜູ້ຖືກຫາ. ສະນັ້ນ, ມັນຈຶ່ງມີຄວາມສຳຄັນທີ່ເຈົ້າໜ້າທີ່ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດໃນການເກັບກຳຫຼັກຖານ ໂດຍອີງຕາມມາດຕາ 36 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

## ທ່ານ ຄິດ ຟາຕູຣາຊັນ

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
"ການສືບສວນ-ສອບສວນທາງດ້ານການເງິນ" ແລະ "ການຟອກເງິນ"



ການສືບສວນ-ສອບສວນແບບຄູ່ຂະໜານແມ່ນຫຍັງ? ແມ່ນຂະບວນການກຳນົດຈຸດເຊື່ອມໂຍງລະຫວ່າງອາຊະຍາກຳ ແລະ ແຫຼ່ງທີ່ມາຂອງຊັບສິນຜູ້ຖືກສົງໄສ ຕາມທີ່ໄດ້ກຳນົດໄວ້ໃນ ຄຳສັ່ງແນະນຳວ່າດ້ວຍການດຳເນີນຄະດີການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເລກທີ 01/ຄບສຟ ລົງວັນທີ 8 ມັງກອນ 2020. ການຕິດຕາມຊັບສິນ, ທຸລະກິດ ແລະ ການເຮັດທຸລະກຳຂອງຜູ້ຖືກສົງໄສ ແມ່ນຂັ້ນຕອນທີ່ສຳຄັນ ໃນການດຳເນີນການສືບສວນ-ສອບສວນ. ແຫຼ່ງຂໍ້ມູນທີ່ສຳຄັນເຫຼົ່ານີ້ແມ່ນພື້ນຖານຂອງການສືບສວນ-ສອບສວນທາງດ້ານການເງິນໃນຄະດີການຟອກເງິນ ເຊິ່ງສາມາດໄດ້ຈາກ ສຳນັກງານຂຶ້ນທະບຽນລົດ ແລະ ທີ່ດິນ, ຮ້ານແລກປ່ຽນເງິນຕາ, ຮ້ານບໍລິການໂອນເງິນ, ບົດລາຍງານທຸລະກຳທີ່ໜ້າສົງໄສຈາກທະນາຄານ, ທະນາຍຄວາມ ແລະ ນັກບັນຊີ.

ນິຍາມ, ຈຸດປະສົງ ແລະ ຂະບວນການຟອກເງິນ ໄດ້ຖືກກຳນົດໄວ້ຢູ່ໃນປະມວນກົດໝາຍອາຍາສະບັບປີ 2017 ແລະ ກົດໝາຍຕ້ານ, ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປີ 2014. ການຟອກເງິນສາມາດດຳເນີນໃນຮູບແບບໃດກໍໄດ້ ເຊິ່ງເປັນສາເຫດທີ່ເຮັດໃຫ້ນິຍາມຂອງມັນມີຄວາມໝາຍທີ່ກວ້າງ ແລະ ຍັງກຳນົດໂທດຕໍ່ບຸກຄົນ ແລະ ນິຕິບຸກຄົນນຳອີກດ້ວຍ. ດັ່ງນັ້ນ, ການດຳເນີນຄະດີຜູ້ກະທຳຜິດສະຖານການຟອກເງິນ ເພື່ອຍຶດເອົາລາຍໄດ້ຈາກອາຊະຍາກຳ ເປັນເຄື່ອງມືທີ່ສຳຄັນໃນການປາບປາມກິດຈະກຳທີ່ຜິດກົດໝາຍຂອງກຸ່ມອາຊະຍາກອນ.




## ທ່ານ ຄຣິສ ແບັດ

ທີ່ປຶກສາດ້ານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນລະດັບພາກພື້ນ,
ອົງການສະຫະປະຊາຊາດຕ້ານສິ່ງເສບຕິດ ແລະ ອາຊະຍາກຳ (UNODC)
"ມາດຕາ 130 ຂອງປະມວນກົດໝາຍອາຍາ (ການຟອກເງິນ): ອົງປະກອບ ແລະ ປະເດັນທີ່ຕ້ອງພິສູດ"



ຫຼັກຖານທາງກົງ, ຫຼັກຖານທາງອ້ອມ ຫຼື ຫຼັກຖານຕາມສະຖານະການສາມາດນຳໃຊ້ເພື່ອພິສູດວ່າ ຜູ້ຖືກສົງໄສ ໄດ້ຮູ້ ຫຼື ສົງໄສວ່າຊັບສິນນັ້ນໄດ້ມາຈາກການກໍ່ອາຊະຍາກຳ ຫຼື ບໍ່. ຫຼັກຖານທາງກົງໄດ້ແກ່ ຄຳຮັບສາລະພາບ, ຂໍ້ມູນ ແລະ ບົດສົນທະນາ ເຊິ່ງແຕກຕ່າງຈາກຫຼັກຖານທາງອ້ອມທີ່ໄດ້ມາຈາກການອະນຸມານ. ຄະດີຕົວຈິງຫຼາຍຄະດີໄດ້ຖືກຍົກຂຶ້ນມາສະແດງໃຫ້ເຫັນເຖິງສັນຍານຂອງການຟອກເງິນ ເຊັ່ນ: ການຂົນສົ່ງເງິນສົດຂ້າມຊາຍແດນ ຫຼື ການປະປົນລາຍໄດ້ທີ່ຜິດກົດໝາຍເຂົ້າໃນທຸລະກິດທີ່ຖືກກົດໝາຍ. ເພື່ອພິສູດວ່າ ຜູ້ຖືກສົງໄສມີສ່ວນກ່ຽວຂ້ອງໃນການຟອກເງິນ ຫຼື ບໍ່ ເຈົ້າໜ້າທີ່ຈະຕ້ອງປຽບທຽບຄວາມແຕກໂຕນກັນລະຫວ່າງວິຖີການດຳລົງຊີວິດ ແລະ ລາຍຮັບທີ່ຖືກກົດໝາຍ ໂດຍການສ້າງປະຫວັດຂໍ້ມູນທາງດ້ານການເງິນ. ວິທີການນີ້ສາມາດຊ່ວຍໃຫ້ເຈົ້າໜ້າທີ່ຮູ້ໄດ້ວ່າ ຜູ້ຖືກສົງໄສມີຖານະຮັ່ງມີເກີນລາຍໄດ້ທີ່ຖືກກົດໝາຍຂອງຕົນ ເຊິ່ງເປັນສັນຍານຂອງການຟອກເງິນ.

# ແບບເຝິກຫັດພາກປະຕິບັດຕົວຈິງ - ກໍລະນີສຶກສາ

## ທ່ານ ນາງ ອາລີນາ ທີມູສ໌

ເຈົ້າໜ້າທີ່ໂຄງການ, ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ



ກໍລະນີສຶກສາກ່ຽວກັບການຄ້າມະນຸດ ເຊິ່ງເປັນກິດຈະກໍາແບບເຝິກຫັດໃຫ້ແກ່ບັນດາເຈົ້າໜ້າທີ່ ໃນການກໍານົດການກະທໍາຜິດສະຖານການຄ້າມະນຸດພ້ອມທັງຂັ້ນຕອນທີ່ສໍາຄັນໃນການດໍາເນີນການສືບສວນ-ສອບສວນ ເປັນຕົ້ນແມ່ນ ການເກັບກໍາຂໍ້ມູນຫຼັກຖານເພື່ອດໍາເນີນການສັ່ງຟ້ອງຄະດີ.

### ການຈໍາລອງການສໍາພາດໃນກໍລະນີສຶກສາ ການຄ້າມະນຸດ

ການຈໍາລອງສະຖານະການສໍາພາດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ຈັດຂຶ້ນເພື່ອສະແດງທັກສະ ແລະ ເຕັກນິກການສໍາພາດໃນສະຖານະການຕົວຈິງ ພ້ອມທັງການເກັບກໍາຂໍ້ມູນຈາກການສໍາພາດດັ່ງກ່າວ. ເຈົ້າໜ້າທີ່ຕໍາຫຼວດໄດ້ປະກອບສ່ວນໃນກິດຈະກໍາໂດຍສະແດງໃຫ້ເຫັນເຖິງການປະຕິບັດທີ່ດີ ແລະ ສະໜອງຂໍ້ມູນທີ່ພຽງພໍໃຫ້ແກ່ເຈົ້າໜ້າທີ່ອື່ນໆ ໃນການກໍານົດການກະທໍາຜິດ ແລະ ຂັ້ນຕອນດໍາເນີນການຕໍ່ໄປສໍາລັບໜ່ວຍງານບັງຄັບໃຊ້ກົດໝາຍ.



ພາຍຫຼັງການສົນທະນາ, ກໍໄດ້ມີການສະຫຼຸບຜົນ ໂດຍການຍົກປະເດັນສໍາຄັນທີ່ແຕ່ລະກຸ່ມໄດ້ກ່າວເຖິງ ເຊິ່ງສະແດງໃຫ້ເຫັນເຖິງໂຄງສ້າງແຜນການໃນການກະກຽມການສໍາພາດຜູ້ຖືກເຄາະຮ້າຍເມື່ອພົບວ່າມີການຄ້າມະນຸດເກີດຂຶ້ນ.





ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບສ່ວນໃນກິດຈະກໍາດັ່ງກ່າວ ເຊິ່ງເປັນໂອກາດໃນການແລກປ່ຽນວິທີການປະຕິບັດທີ່ຊໍານານຈາກແຕ່ລະແຂວງ.



## ແບບເຝິກຫັດພາກປະຕິບັດຕົວຈິງຂອງການສືບສວນ-ສອບສວນທາງດ້ານການເງິນ

ການສືບສວນ-ສອບສວນອາຊະຍາກຳທີ່ມີການຈັດຕັ້ງມີຄວາມຫຍຸ້ງຍາກສະລັບສັບຊ້ອນ ເຊິ່ງເປັນສິ່ງທ້າທາຍສຳລັບໜ່ວຍງານບັງຄັບໃຊ້ກົດໝາຍໃນການປະຕິບັດວຽກງານຕົວຈິງ. ທ່ານ ແບັດ ໄດ້ແລກປ່ຽນປະສົບການຂອງຕົນໃນການນຳໃຊ້ເຕັກນິກການສືບສວນ-ສອບສວນ ໂດຍອີງໃສ່ກໍລະນີສຶກສາການຄ້າມະນຸດ ແລະ ນຳພາຜູ້ເຂົ້າຮ່ວມກອງປະຊຸມໃນແຕ່ລະບາດກ້າວຂອງການເຊື່ອມໂຍງກັນລະຫວ່າງການກະທຳຜິດຕົ້ນ ແລະ ການຟອກເງິນ ດ້ວຍການວິເຄາະແຫຼ່ງຂໍ້ມູນເປີດ ແລະ ຂໍ້ມູນປິດຕ່າງໆ ເຊັ່ນ: ບັນຊີເຟດສ໌ບຸກ, ຂ່າວສານ, ບົດລາຍງານທຸລະກຳທີ່ໜ້າສົງໄສ/ທຸລະກຳເງິນສົດ, ຂໍ້ມູນບັນຊີທະນາຄານ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

ໃນສະພາບການພັດທະນາຢ່າງວ່ອງໄວຂອງເຕັກໂນໂລຊີ, ມັນເປັນສິ່ງທີ່ສຳຄັນທີ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍເສີມສ້າງທັກສະໃນການນຳໃຊ້ເຄື່ອງມືທີ່ທັນສະໄໝປະກອບເຂົ້າໃນການສືບສວນ-ສອບສວນແບບຄູ່ຂະໜານ. ໂດຍຜ່ານແບບເຝິກຫັດນີ້ ຜູ້ເຂົ້າຮ່ວມໄດ້ພັດທະນາຄວາມສາມາດ ແລະ ປະຕິບັດການສືບສວນ-ສອບສວນທາງດ້ານການເງິນ ແລະ ການສືບສວນ-ສອບສວນການກະທຳຜິດຕົ້ນຕົວຈິງໃນແຕ່ລະບາດກ້າວ.







**ການນຳສະເໜີບົດສະຫຼຸບກຸ່ມສົນທະນາ**

ແຕ່ລະກຸ່ມໄດ້ມີການນຳສະເໜີບົດສະຫຼຸບແຜນການສືບສວນ-ສອບສວນໃນຂັ້ນຕໍ່ໄປເພື່ອດຳເນີນການສັ່ງຟ້ອງຄະດີ. ໃນກິດຈະກຳນີ້ບັນດາຜູ້ເຂົ້າຮ່ວມແຕ່ລະແຂວງໄດ້ມີໂອກາດສົນທະນາກັນຢ່າງເລິກເຊິ່ງກ່ຽວກັບການຊັ່ງຊາຕີລາຄາຫຼັກຖານ ແລະ ການຊອກຫາຂໍ້ມູນອື່ນໆທີ່ກ່ຽວຂ້ອງ ເຊິ່ງອາດຈະສາມາດນຳມາປະກອບຫຼັກຖານເພີ່ມເຕີມ.

# ພາກຄຳຖາມ ແລະ ຄຳຕອບ

## ທ່ານ ພັທ ໄຊຈິດ ໄຊຍະເດດ,

ຫ້ອງການຕຳຫຼວດປ້ອງກັນຄວາມສະຫງົບ ແຂວງຈຳປາສັກ



**ຄຳຖາມ:** ກົນໄກຕ້ານການຄ້າມະນຸດຢູ່ຂັ້ນສູນກາງ ສາມາດຊ່ວຍເປັນອົງການໃຈກາງປະສານງານລະຫວ່າງເຈົ້າໜ້າທີ່ຢູ່ຂັ້ນແຂວງ/ທ້ອງຖິ່ນ ແລະ ຕ່າງປະເທດກ່ຽວກັບບັນຫາການຄ້າມະນຸດໄດ້ແນວໃດ?

**ຄຳຕອບ:** ທ່ານ ພັທ ຖາວອນ ແກ້ວພິລາ, ກະຊວງປ້ອງກັນຄວາມສະຫງົບ ຕອບວ່າ ສຳລັບວຽກງານການປະສານງານນຳເຈົ້າໜ້າທີ່ຕ່າງປະເທດແມ່ນຖືຕາມບົດບັນທຶກຄວາມເຂົ້າໃຈ. ການຮ່ວມມືແບ່ງອອກເປັນສອງແບບຄື: ແບບທາງການ ແລະ ບໍ່ເປັນທາງການ. ເຈົ້າໜ້າທີ່ແຂວງຈຳປາສັກສາມາດປະສານງານໂດຍຜ່ານສູນກາງກໍຄື ກະຊວງປ້ອງກັນຄວາມສະຫງົບເພື່ອເອົາຂໍ້ມູນຢ່າງເປັນທາງການ.

## ທ່ານ ແສນປະເສີດ ພົມມາລີໄຊ,

ອົງການໄອຍະການປະຊາຊົນ ແຂວງຈຳປາສັກ



**ຄຳຖາມ:** ໃນກໍລະນີການຍັກຍອກຊັບສິນ ເຊິ່ງກະທຳໂດຍຄົນຕ່າງປະເທດຢູ່ລາວ ແຕ່ຜູ້ກ່ຽວໄດ້ໂຕນໜີກັບປະເທດຂອງຕົນຄືນ. ເຈົ້າໜ້າທີ່ສາມາດຮ້ອງຂໍສົ່ງຜູ້ຮ້າຍຂ້າມແດນຈາກປະເທດດັ່ງກ່າວໂດຍຜ່ານອົງການໄອຍະການປະຊາຊົນສູງສຸດໄດ້ບໍ?

**ຄຳຕອບ:** ທ່ານ ນາງ ເມັດມະນີ ວັນນະສີ, ອົງການໄອຍະການປະຊາຊົນສູງສຸດ ຕອບວ່າ: ຖ້າຫາກມີສົນທິສັນຍາສອງຝ່າຍລະຫວ່າງ ສປປ ລາວ ກັບປະເທດນັ້ນໆ ແມ່ນສາມາດຮ້ອງຂໍສົ່ງຕົວຜູ້ຮ້າຍຂ້າມແດນຜູ້ກ່ຽວໃຫ້ກັບມາລາວໄດ້ ແຕ່ສິ່ງທີ່ສຳຄັນແມ່ນຕ້ອງປະກອບສຳນວນຄະດີ ເປັນຕົ້ນແມ່ນຫຼັກຖານທີ່ໜັກແໜ້ນກ່ຽວກັບການກະທຳຜິດພ້ອມດ້ວຍ ຄຳຖະແຫຼງຂອງອົງການໄອຍະການຢ່າງຄົບຖ້ວນ.

## ທ່ານ ພູ ສຸລິຍາ,

ຫ້ອງການຕຳຫຼວດປ້ອງກັນຄວາມສະຫງົບ ແຂວງສະຫວັນນະເຂດ

**ຄຳຖາມ:** ຖ້າມີບຸກຄົນໜຶ່ງນຳເງິນທີ່ໄດ້ມາຈາກການກະທຳຜິດຕົ້ນເຊິ່ງເປັນເງິນສົດມາຝາກໄວ້ນຳໝູ່ ໃນໄລຍະເວລາໃດໜຶ່ງແລ້ວຈຶ່ງກັບໄປເອົາເງິນຄືນ. ຜູ້ທີ່ຮັບຝາກນັ້ນສາມາດເອີ້ນວ່າເປັນຜູ້ຟອກເງິນ ຫຼື ບໍ່?



**ຄຳຕອບ:** ທ່ານ ຟາຄູຣາຊັນ, ເຈົ້າໜ້າທີ່ໂຄງການສະຖາບັນ ILSTA ຕອບວ່າ ຕາມປະມວນກົດໝາຍອາຍາ ມາດຕາ 130 ກຳນົດໄວ້ວ່າບຸກຄົນນັ້ນໄດ້ຮູ້ ຫຼື ສົງໄສວ່າເງິນນັ້ນໄດ້ມາຈາກການກະທຳຜິດຕົ້ນ. ບາງຄັ້ງຜູ້ຮັບຝາກອາດບໍ່ຮູ້ ຫຼື ອາດເປັນຜູ້ສົມຮູ້ຮ່ວມຄິດ ຫຼື ບາງຄັ້ງອາດມີຄວາມສົງໄສກ່ຽວກັບເງິນທີ່ນຳມາຟອກນັ້ນ. ການຝາກເງິນນຳໝູ່ເພື່ອນຍາດພີ່ນ້ອງ ຫຼື ບຸກຄົນໃກ້ຊິດ ແມ່ນໜຶ່ງໃນວິທີທີ່ອາຊະຍາກອນມັກນຳໃຊ້ເຂົ້າໃນການຟອກເງິນ. ດັ່ງນັ້ນ, ບຸກຄົນດັ່ງກ່າວສາມາດເປັນຜູ້ຖືກສົງໄສທີ່ສົມຮູ້ຮ່ວມຄິດໃນການຟອກເງິນ ຫຼື ເປັນຜູ້ຟອກເງິນ ຖ້າມີອົງປະກອບດັ່ງກ່າວ.

## ທ່ານ ສຸລິສັກ ແກ້ວປະເສີດ,

ສານປະຊາຊົນ ແຂວງຈຳປາສັກ



**ຄຳຖາມ:** ໃນກໍລະນີຄູ່ຜົວເມຍຄູ່ໜຶ່ງ, ພາຍຫຼັງທີ່ເມຍໄດ້ສໍ້ໂກງເງິນຈາກບໍລິສັດຈຳນວນປະມານ 1 ລ້ານບາດເພື່ອເອົາມາໃຫ້ຜົວສ້າງເຮືອນ. ກໍລະນີນີ້ເອີ້ນວ່າການຟອກເງິນໄດ້ບໍ? ແລະ ຜູ້ເປັນຜົວມີຄວາມຜິດບໍ?

**ຄຳຕອບ:** ທ່ານ ຟາຕູຣາຊັນ ກ່າວວ່າ ການສ້າງເຮືອນ ເປັນວິທີການໜຶ່ງທີ່ອາຊະຍາກອນນຳໃຊ້ເຂົ້າໃນການຟອກເງິນ. ສ່ວນປະເດັນກ່ຽວກັບຄວາມຜິດຂອງຜູ້ທີ່ກ່ຽວຂ້ອງໃນການຟອກເງິນ, ເຈົ້າໜ້າທີ່ຕ້ອງດຳເນີນການສືບສວນ-ສອບສວນເພື່ອຊອກຮູ້ວ່າຜູ້ເປັນຜົວນັ້ນໄດ້ຮູ້ເຫັນເປັນໃຈ ຫຼື ສົມຮູ້ຮ່ວມຄິດນຳບໍ. ໃນກໍລະນີທີ່ກ່າວມານີ້, ຜູ້ເປັນຜົວຄວນຮູ້ວ່າ ເມຍຂອງຕົນເອງມີລາຍໄດ້ເທົ່າໃດ ເຊິ່ງການທີ່ເອົາເງິນມາຈຳນວນຫຼາຍນັ້ນຜູ້ເປັນຜົວຍ່ອມຮູ້ ຫຼື ສົງໄສວ່າເງິນທີ່ໄດ້ມານັ້ນບໍ່ແມ່ນມາຈາກເງິນເດືອນຂອງເມຍ ເຊິ່ງອາດໄດ້ມາຈາກການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ.

## ທ່ານ ແສນປະເສີດ ພົມມາລີໄຊ,

ອົງການໄອຍະການປະຊາຊົນ ແຂວງຈຳປາສັກ



**ຄຳຖາມ:** ໃນແຂວງຈຳປາສັກ ມີກໍລະນີການນຳເຂົ້າເງິນຜ່ານດ່ານກຳປູເຈຍ-ລາວເກີດຂຶ້ນ ໂດຍຜູ້ຖືກຫານຳໃຊ້ລົດຕູ້ມາໃນນາມນັກທ່ອງທ່ຽວ ແລ້ວເກີດອຸບັດຕິເຫດເຮັດໃຫ້ລົດຕູ້ຈີກຂາດ ແລ້ວປາກົດເຫັນເງິນເຮ່ຍອອກມາຈາກລົດຕູ້ຈຳນວນ 5 ແສນໂດລາ. ຜ່ານການສືບສວນທາງເຈົ້າໜ້າທີ່ສາມາດຊອກຮູ້ໄດ້ວ່າເງິນດັ່ງກ່າວນັ້ນ ແມ່ນໄດ້ມາຈາກການຄ້າຂາຍຢາເສບຕິດຕາມທີ່ຜູ້ກ່ຽວຮັບສາລະພາບ. ເຈົ້າໜ້າທີ່ສາມາດດຳເນີນຄະດີການຟອກເງິນນຳຜູ້ກ່ຽວໄດ້ບໍ?

**ຄຳຕອບ:** ທ່ານ ຄຣິສ ແບັດ, ທີ່ປຶກສາລະດັບພາກພື້ນຈາກອົງການ UNODC ຕອບວ່າ: ເຈົ້າໜ້າທີ່ບໍ່ສາມາດດຳເນີນຄະດີການຟອກເງິນໄດ້ໃນທັນທີເລີຍ ເນື່ອງຈາກວ່າຖ້າເບິ່ງຕາມນິຍາມມາດຕາ 2 ຂອງກົດໝາຍຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍແລ້ວ ພວກເຮົາພຽງແຕ່ປາກົດເຫັນຜູ້ຖືກສົງໄສເຄື່ອນຍ້າຍເງິນແຕ່ຍັງບໍ່ທັນມີການປ່ຽນຮູບຂອງເງິນເທື່ອ, ນັ້ນແມ່ນປະເດັນທີໜຶ່ງ ທີ່ຕ້ອງໄດ້ພິຈາລະນາ. ປະເດັນທີສອງ: ຖ້າຫາກຜູ້ກ່ຽວຮູ້ທີ່ມາຂອງເງິນວ່າມາແຕ່ໃສ ເຊິ່ງມາຈາກການຄ້າຂາຍຢາເສບຕິດແມ່ນເຈົ້າໜ້າທີ່ສາມາດດຳເນີນຄະດີຜູ້ກ່ຽວສະຖານສົມຮູ້ຮ່ວມຄິດໃນການຟອກເງິນໄດ້. ສ່ວນບັນຫາເງິນທີ່ຕົກເຮ່ຍເສຍຫາຍ ເຈົ້າໜ້າທີ່ຄວນສືບຕໍ່ຄົ້ນຫາເພື່ອຮິບເປັນຂອງລັດໄວ້.

# ການແຂ່ງຂັນຖາມ-ຕອບຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ




ຜູ້ຊະນະເລີດສໍາລັບກິດຈະກໍາການຕອບຄໍາຖາມຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ
ໃນກອງປະຊຸມລະດັບພາກຄັ້ງທີ III ທີ່ ແຂວງຈໍາປາສັກ
ທ່ານ ແສນປະເສີດ ພົມມາລີໄຊ
ອົງການໄອຍະການປະຊາຊົນ ແຂວງຈໍາປາສັກ

www.ilsta.org

Institute for Legal Support and Technical Assistance

## ຕິດຕາມພວກເຮົາໄດ້ທີ່

www.ilsta.org



ILSTA Laos




@ILSTA_Laos




ILSTA in Laos




ຫ້ອງການສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
ຊັ້ນ 6, ຕຶກ NNN, ຖະໜົນ ບູລິຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (+856) 21 41 0095, ອີເມວ: contact@ilsta.org ເວັບໄຊ: www.ilsta.org